ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 0060 /ຣສສ

ນະຄອນຫຼວງວຽງຈັນ, ວັນທີ 11/01/23

# ຄຳແນະນຳ (ສະບັບປັບປຸງ)

## ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການປະກັນສັງຄົມ

- ອີງຕາມ ກົດໝາຍ ວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ), ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 602/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງອົງການປະກັນສັງຄົມແຫ່ງຊາດ, ສະບັບເລກທີ 0073/ອປຊ, ລົງວັນທີ 10 ມັງກອນ 2023.

## ລັດຖະມົນຕີ ອອກຄຳແນະນຳ:

**I. ຈຸດປະສົງ**

ຄຳແນະນຳສະບັບນີ້ວາງອອກ ເພື່ອຜັນຂະຫຍາຍ ແລະ ແນະນຳການຈັດຕັ້ງປະຕິບັດເນື້ອໃນບາງມາດຕາ ຂອງກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ), ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018 ໃຫ້ລະອຽດຈະແຈ້ງ ແລະ ເປັນບ່ອນອີງໃນການສືບຕໍ່ປະຕິບັດກົດໝາຍດັ່ງກ່າວນີ້ໃນຂອບເຂດທົ່ວປະເທດ.

**II. ອະທິບາຍເພີ່ມເຕີມ ເນື້ອໃນ ແລະ ຂໍ້ກຳນົດຂອງບາງມາດຕາ**

**1. ມາດຕາ 24 ແລະ 47 ເງື່ອນໄຂຮັບການອຸດໜູນອອກລູກ (ແນະນຳໃໝ່)**

- ກໍລະນີ ຜົວເມຍ ເປັນຜູ້ປະກັນຕົນທັງສອງ ແລະ ໃນໄລຍະທີ່ເມຍຮັບອຸດໜູນອອກລູກ ຫາກຜູ້ກ່ຽວເສຍຊີວິດ ເງິນອຸດໜູນອອກລູກແມ່ນຈະສິ້ນສຸດ, ສຳລັບຜົວແມ່ນຈະບໍ່ເກີດສິດຮັບອຸດໜູນອອກລູກ; ກໍລະນີ ເສຍຊີວິດ ກ່ອນຮັບອຸດໜູນອອກລູກ ເງິນອຸດໜູນບຳເນັດແມ່ນໃຫ້ໄດ້ຮັບຕາມສິດຂອງຜົວ;
- ກໍລະນີ ຜູ້ປະກັນຕົນເພດຍິງ ໄດ້ຮັບການອຸດໜູນມາໄລຍະໜຶ່ງແລ້ວ ລູກເສຍຊີວິດ ແມ່ນຈະໄດ້ຮັບການອຸດໜູນລູກເສຍຊີວິດຕາມເງື່ອນໄຂ ແລະ ແມ່ ຍັງຈະສືບຕໍ່ໄດ້ຮັບເງິນອຸດໜູນອອກລູກໃຫ້ຄົບຕາມລະບຽບການ;
- ກໍລະນີ ເມຍຜູ້ປະກັນຕົນໄດ້ຖືພາກ່ອນ ຫຼື ອອກລູກຫຼັງຜູ້ປະກັນຕົນເສຍຊີວິດ ແລະ ເມຍ ບໍ່ໄດ້ເປັນຜູ້ປະກັນຕົນ ຈະໄດ້ຮັບບຳເນັດອອກລູກຕາມສິດຂອງຜົວ.

**2. ມາດຕາ 25 ແລະ 49 ການຄິດໄລ່ເງິນອຸດໜູນອອກລູກ (ປັບປຸງ)**

- ການຄິດໄລ່ເງິນອຸດໜູນອອກລູກເປັນລາຍເດືອນ ສຳລັບຜູ້ທີ່ມີໄລຍະການຮັບອຸດໜູນ ໜຶ່ງຮ້ອຍຫ້າວັນ ແມ່ນໃຫ້ຈ່າຍເປັນ ສາມຄັ້ງ ແລະ ນັບໄລຍະປະກັນຕົນເປັນ ສາມເດືອນ, ກໍລະນີຜູ້ທີ່ມີລູກແຝດ ທີ່ມີໄລຍະການຮັບອຸດ

ໜູນ ໜຶ່ງຮ້ອຍຊາວວັນ ແມ່ນໃຫ້ຈ່າຍເປັນ ສີ່ຄັ້ງ ແລະ ນັບໄລຍະປະກັນຕົນເປັນ ສີ່ເດືອນ, ກໍລະນີຍື່ນເອກະສານຮ້ອງຂໍອຸດໜູນຊ້າ ນັບຈາກວັນທີ່ເກີດລູກ ຫຼື ວັນທີ່ອອກໂຮງໝໍ ແມ່ນສາມາດຈ່າຍເງິນອຸດໜູນອອກລູກຍ້ອນຫຼັງໄດ້;

- ການຄິດໄລ່ເງິນອຸດໜູນໃຫ້ຜູ້ທີ່ພັກວຽກກ່ອນອອກລູກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ຊຶ່ງພາຍຫຼັງອອກລູກແລ້ວ ສາມາດປະກອບເອກະສານຂໍຮັບການອຸດໜູນດັ່ງກ່າວນຳອົງການປະກັນສັງຄົມແຫ່ງຊາດ ໂດຍໃຫ້ຄິດໄລ່ລວມກັບໄລຍະການພັກກ່ອນ ແລະ ຫຼັງການອອກລູກ ເຂົ້າກັນ, ຊຶ່ງມີໄລຍະ ໜຶ່ງຮ້ອຍຫ້າວັນ ຫຼື ໜຶ່ງຮ້ອຍຊາວວັນ ຖ້າແມ່ນລູກແຝດ;

- ການກຳນົດໄລຍະຂອງການຖືພາ ສຳລັບການອຸດໜູນອອກລູກ ແລະ ບຳເນັດອອກລູກ ທີ່ມີການກຳນົດໄລຍະຖືພາເປັນ ອາທິດ ຕາມໜັງສືຢັ້ງຢືນການແພດ ແມ່ນໃຫ້ຖືເອົາ ສີ່ອາທິດ ຄິດໄລ່ເປັນ ໜຶ່ງເດືອນ.

**3. ມາດຕາ 52 (ໃໝ່) ເງື່ອນໄຂຮັບການອຸດໜູນເສຍກຳລັງແຮງງານ (ແນະນຳໃໝ່)**

ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມນັບແຕ່ ສິບສອງເດືອນຂຶ້ນໄປ ໃນໄລຍະຊາວສີ່ເດືອນສຸດທ້າຍກ່ອນການຮັບອຸດໜູນດັ່ງກ່າວ ໃນກໍລະນີອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ.

**4. ມາດຕາ 30 ແລະ ມາດຕາ 54 ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ (ປັບປຸງ)**

- ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານ ສຳລັບພາກລັດ ໃຫ້ຄິດໄລ່ໂດຍເອົາເງິນເດືອນສຸດທ້າຍ ແລະ ສຳລັບພາກວິສາຫະກິດ ໃຫ້ຄິດໄລ່ໂດຍເອົາເງິນປະກັນຕົນສະເລ່ຍໃນໄລຍະ ຫົກເດືອນ ຄືນຫຼັງ ຂອງຜູ້ກ່ຽວກ່ອນເສຍກຳລັງແຮງງານ ຫຼື ກ່ອນຮັບການອຸດໜູນປ່ວຍການ ຄູນກັບລະດັບສ່ວນຮ້ອຍຂອງການອຸດໜູນເສຍກຳລັງແຮງງານ ຄັ້ງຫຼ້າສຸດ;

- <u>ຕົວຢ່າງ</u>: ທ້າວ ກ ມີເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ສຸດທ້າຍ ເທົ່າກັບ 2.500.000 ກີບ ແລະ ເສຍກຳລັງແຮງງານຈັດໃນປະເພດທີ ສອງ ເທົ່າກັບ 70%.

ຖ້າຜູ້ກ່ຽວເສຍກຳລັງແຮງງານ ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ ຂອງຜູ້ກ່ຽວເທົ່າກັບ: 2.500.000 ກີບ x 70% x 100% = 1.750.000 ກີບ/ເດືອນ ກໍລະນີຜູ້ກ່ຽວຍັງເຮັດວຽກມີເງິນເດືອນ ເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.750.000 x 50% = 875.000 ກີບ/ເດືອນ ແລະ ກໍລະນີຜູ້ກ່ຽວເຂົ້າຮັບບຳນານເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.750.000 x 25% = 437.500 ກີບ/ເດືອນ.

**ຖ້າຜູ້ກ່ຽວເສຍກຳລັງແຮງງານ ຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ ຂອງຜູ້ກ່ຽວເທົ່າກັບ: 2.500.000 ກີບ x 70% x 80% = 1.400.000 ກີບ/ເດືອນ, ກໍລະນີຜູ້ກ່ຽວຍັງເຮັດວຽກມີເງິນເດືອນ ເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.400.000 x 50% = 700.000 ກີບ/ເດືອນ ແລະ ກໍລະນີຜູ້ກ່ຽວເຂົ້າຮັບບຳນານເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.400.000 x 25% = 350.000 ກີບ/ເດືອນ.**

- ກໍລະນີ ຜູ້ເກີດສິດຮັບການອຸດໜູນເສຍກຳລັງແຮງງານ ແມ່ນໃຫ້ເອົາເງິນເດືອນປະກັນຕົນ ກ່ອນຮັບການອຸດໜູນປ່ວຍການ ມາເປັນບ່ອນອີງໃນການຄິດຄິດໄລ່; ສຳລັບ ຜູ້ທີ່ບໍ່ໄດ້ຜ່ານການຮັບອຸດໜູນປ່ວຍການ ແມ່ນໃຫ້ເອົາເງິນເດືອນປະກັນຕົນກ່ອນເສຍກຳລັງແຮງງານ ເປັນບ່ອນອີງໃນການຄິດໄລ່;

- ຜູ້ປະກັນຕົນທີ່ໄດ້ຮັບການອຸດໜູນເສຍກຳລັງແຮງງານລາຍເດືອນ ທີ່ບໍ່ແມ່ນການສູນເສຍອະໄວຍະວະ ຫຼື ການເສຍກຳລັງແຮງງານຖາວອນ ຊຶ່ງໄດ້ຮັບການອະນຸມັດຕາມກົດໝາຍສະບັບນີ້ ຕ້ອງມີການປະເມີນລະດັບການເສຍກຳລັງແຮງງານຄືນໃໝ່ ໂດຍແຍກເປັນ ສອງຄັ້ງ ຄື: ພາຍຫຼັງຮັບການອຸດໜູນແລ້ວ ສອງປີ ຕ້ອງໄດ້ປະເມີນຄືນເປັນຄັ້ງທຳອິດ ແລະ ຫຼັງຈາກນັ້ນ ສາມປີ ຕ້ອງໄດ້ປະເມີນຄືນເປັນຄັ້ງສຸດທ້າຍ, ຖ້າບໍ່ມາປະເມີນຄືນຕາມທີ່ກຳນົດໄວ້ ແມ່ນຈະຖືກໂຈະເງິນອຸດໜູນເສຍກຳລັງແຮງງານ ຈົນກວ່າຈະໄດ້ຮັບການປະເມີນໃຫ້ຖືກຕ້ອງຕາມລະບຽບການ.

5. ມາດຕາ 35 ການກຳນົດອັດຕາສ່ວນຮ້ອຍຂອງການອຸດໜູນບຳນານ (ແນະນຳໃໝ່)

| ໄລຍະທີ 1 ສຳລັບ ເປົ້າໝາຍ ປີ 1954 ຄືນຫຼັງ | | ໄລຍະທີ 2 ສຳລັບເປົ້າໝາຍ ປີ 1955-1974 | | ໄລຍະທີ 3 ສຳລັບເປົ້າໝາຍ ປີ 1975 ເປັນຕົ້ນມາ | | | ໄລຍະທີ 4 ສຳລັບເປົ້າໝາຍ ປີ 2018 ເປັນຕົ້ນມາ | | |
|---|---|---|---|---|---|---|---|---|---|
| ປີການ 20 | ສ່ວນຮ້ອຍ ບຳນານແຕ່ 80% - 100% | ປີການ 20 | ສ່ວນຮ້ອຍ ບຳນານ 75% - 90% | ປີການ | | ສ່ວນຮ້ອຍ ບຳນານ 70%- 85% | ປີການ | | ສ່ວນຮ້ອຍ ບຳນານ 60%- 75% |
| | | | | 20 ປີ | 25 ປີ | | 20 ປີ | 25 ປີ | |
| 20 | 80 | 20 | 75 | 20 | 25 | 70 | 20 | 25 | 60 |
| 21 | 81 | 21 | 76 | 21 | 26 | 71 | 21 | 26 | 61 |
| 22 | 82 | 22 | 77 | 22 | 27 | 72 | 22 | 27 | 62 |
| 23 | 83 | 23 | 78 | 23 | 28 | 73 | 23 | 28 | 63 |
| 24 | 84 | 24 | 79 | 24 | 29 | 74 | 24 | 29 | 64 |
| 25 | 85 | 25 | 80 | 25 | 30 | 75 | 25 | 30 | 65 |
| 26 | 86 | 26 | 81 | 26 | 31 | 76 | 26 | 31 | 66 |
| 27 | 87 | 27 | 82 | 27 | 32 | 77 | 27 | 32 | 67 |
| 28 | 88 | 28 | 83 | 28 | 33 | 78 | 28 | 33 | 68 |
| 29 | 89 | 29 | 84 | 29 | 34 | 79 | 29 | 34 | 69 |
| 30 | 90 | 30 | 85 | 30 | 35 | 80 | 30 | 35 | 70 |
| 31 | 91 | 31 | 86 | 31 | 36 | 81 | 31 | 36 | 71 |
| 32 | 92 | 32 | 87 | 32 | 37 | 82 | 32 | 37 | 72 |
| 33 | 93 | 33 | 88 | 33 | 38 | 83 | 33 | 38 | 73 |
| 34 | 94 | 34 | 89 | 34 | 39 | 84 | 34 | 39 | 74 |
| 35 | 95 | 35 ຂຶ້ນໄປ | 90 | 35 ຂຶ້ນໄປ | 40 ຂຶ້ນໄປ | 85 | 35 ຂຶ້ນໄປ | 40 ຂຶ້ນໄປ | 75 |
| 36 | 96 | | | | | | | | |
| 37 | 97 | | | | | | | | |
| 38 | 98 | | | | | | | | |
| 39 | 99 | | | | | | | | |
| 40 ຂຶ້ນໄປ | 100 | | | | | | | | |

6. ມາດຕາ 39 ແລະ 62 ເງື່ອນໄຂຮັບການອຸດໜູນເສຍຊີວິດ

- ຜູ້ທີ່ໄດ້ຮັບການອຸດໜູນສະມາຊິກຄອບຄົວ ກ່ອນກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບປັບປຸງ ແລ້ວຕໍ່ມາຫາກເສຍຊີວິດ ແມ່ນຈະມີສິດໄດ້ຮັບການອຸດໜູນເສຍຊີວິດ ຕາມກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບປັບປຸງ ໂດຍຈະບໍ່ຈຳແນກວ່າໄດ້ຮັບການອະນຸມັດໃຫ້ຮັບການອຸດໜູນສະມາຊິກຄອບຄົວໄລຍະໃດ;
- ກໍລະນີ ຜູ້ປະກັນຕົນ ທີ່ເປັນຜູ້ດູແລຜູ້ເສຍກຳລັງແຮງງານ ຫາກຜູ້ກ່ຽວເສຍຊີວິດ ແມ່ນຈະໄດ້ຮັບການອຸດໜູນເສຍຊີວິດ ຈາກການປະກັນຂອງຜູ້ກ່ຽວ ຫຼື ຈາກການອຸດໜູນຜູ້ດູແລ ຝ່າຍໃດໜຶ່ງເທົ່ານັ້ນ;
- ກໍລະນີ ຜູ້ປະກັນຕົນເຮັດວຽກ ແລະ ມອບເງິນສົມທົບ ກັບສອງຫົວໜ່ວຍວິສາຫະກິດ ຂຶ້ນໄປ ຫາກເສຍຊີ

ວິດ ເງິນອຸດໜູນເສຍຊີວິດ ແມ່ນໃຫ້ເອົາເງິນເດືອນປະກັນຕົນຈາກສອງຫົວໜ່ວຍວິສາຫະກິດ ບວກກັນ ແຕ່ບໍ່ໃຫ້ເກີນເພດານເງິນເດືອນປະກັນຕົນສູງສຸດ ແຕ່ລະໄລຍະ;

- ກໍລະນີຜູ້ປະກັນຕົນເສຍຊີວິດ, ຜົວ ຫຼື ເມຍ ແລະ ລູກ ທີ່ບໍ່ໄດ້ຮັບການອຸດໜູນສະມາຊິກຄອບຄົວ ຫາກເສຍຊີວິດ ຈະບໍ່ໄດ້ຮັບເງິນອຸດໜູນເສຍຊີວິດ.

7. ມາດຕາ 40 ແລະ 63 ການຄິດໄລ່ເງິນອຸດໜູນເສຍຊີວິດ

1) ການຄິດໄລ່ເງິນອຸດໜູນເສຍຊີວິດ ເທົ່າກັບ ສິບຫ້າເດືອນ ຂອງເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ຄືນຫຼັງ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານເດືອນສຸດທ້າຍ ເປັນຈຸດເລີ່ມ ຊຶ່ງການຄິດໄລ່ເງິນອຸດໜູນເສຍຊີວິດ ບົນພື້ນຖານ ປີການ ຫຼື ໄລຍະປີປະກັນຕົນ ຕາມຕາຕະລາງ ດັ່ງນີ້:

| ປີການ/ໄລຍະປະກັນຕົນ | ເງິນອຸດໜູນເສຍຊີວິດ | ໝາຍເຫດ |
|---|---|---|
| 1 ເດືອນ - 1 ປີ | ເທົ່າກັບ 15 ເດືອນ | ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ |
| 3 ເດືອນ - 1 ປີ | ເທົ່າກັບ 15 ເດືອນ | ຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ |
| ເກີນ 1 ປີ - 2 ປີ | ເທົ່າກັບ 16 ເດືອນ | ຜູ້ມີປີການ/ໄລຍະປະກັນຕົນເກີນ 1 ປີ ຫາ 6 ປີ ຈະໄດ້ເພີ່ມອີກ 1 ເດືອນ ຕໍ່ ປີ ທີ່ເກີນ. |
| 3 ປີ | ເທົ່າກັບ 17 ເດືອນ | |
| 6 ປີ | ເທົ່າກັບ 20 ເດືອນ | |
| 7 ປີ | ເທົ່າກັບ 20,5 ເດືອນ | ນັບແຕ່ປີທີ 7 ຂຶ້ນໄປ ຈະໄດ້ເພີ່ມອີກ 0,5 ເດືອນ ຕໍ່ປີທີ່ເກີນ. |
| 8 ປີ | ເທົ່າກັບ 21 ເດືອນ | |

**ຕົວຢ່າງ 1:** ທ້າວ ຂ ມີປີການ ຫຼື ໄລຍະປະກັນຕົນ 25 ປີ ກັບ 5 ເດືອນ ແລະ ມີເງິນເດືອນ ຫຼື ເງິນປະກັນ ຕົນສະເລ່ຍ ຫົກເດືອນ ຄືນຫຼັງ ເທົ່າກັບ 2.500.000 ກີບ, ເງິນອຸດໜູນເສຍຊີວິດ ຄິດໄລ່ ດັ່ງນີ້:

- ການຄິດໄລ່ຈໍານວນເດືອນໃຫ້ອຸດໜູນ
  - ປີທີ 1 ໄດ້ຮັບເທົ່າກັບ 15 ເດືອນ;
  - ປີທີ 2 ຫາ ປີທີ 6 ໄດ້ຮັບເທົ່າກັບ 5 ເດືອນ (2 ຫາ 6 = 5 ປີ x 1 ເດືອນ = 5 ເດືອນ);
  - ປີທີ 7 ຫາ ປີທີ 25 ໄດ້ຮັບເທົ່າກັບ 9 ເດືອນ (7 ຫາ 25 = 19 ປີ x 0,5 ເດືອນ = 9,5 ເດືອນ);
  - ລວມ: 25 ປີການ ຈໍານວນເດືອນໃຫ້ອຸດໜູນ ເທົ່າ 29,5 ເດືອນ, ສໍາລັບສ່ວນເສດຂອງປີ (5 ເດືອນ) ແມ່ນບໍ່ຖືກນໍາເຂົ້າມາຄິດໄລ່.
- **ການຄິດໄລ່ເງິນອຸດໜູນ: 2.500.000 ກີບ x 29,5 ເດືອນ = 73.750.000 ກີບ.**

**ຕົວຢ່າງ 2:** ທ້າວ ຄ ມີປີການ ຫຼື ໄລຍະປະກັນຕົນ 1 ປີ ກັບ 8 ເດືອນ ແລະ ມີເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ຄືນຫຼັງ ເທົ່າກັບ 2.500.000 ກີບ, ເງິນອຸດໜູນເສຍຊີວິດ ຄິດໄລ່ ດັ່ງນີ້:

- ການຄິດໄລ່ຈໍານວນເດືອນໃຫ້ອຸດໜູນ
  - ປີທີ 1 ໄດ້ຮັບເທົ່າກັບ 15 ເດືອນ;
  - ປີທີ 2 ໄດ້ຮັບເທົ່າກັບ 1 ເດືອນ (ສ່ວນເສດຂອງປີຈໍານວນ 8 ເດືອນ ທຽບເທົ່າໃຫ້ເປັນ 1 ປີ ຈຶ່ງຖືເປັນປີທີ 2 ຂອງການປະກັນຕົນ);
  - ດັ່ງນັ້ນໄລຍະປະກັນຕົນ 1 ປີ 8 ເດືອນ ທຽບເທົ່າເປັນ 2 ປີ, ຈໍານວນເດືອນໃຫ້ອຸດໜູນ ເທົ່າ 16 ເດືອນ;
- **ການຄິດໄລ່ເງິນອຸດໜູນ: 2.500.000 ກີບ x 16 ເດືອນ = 40.000.000 ກີບ.**

2) ຜູ້ປະກັນຕົນທີ່ຮັບການອຸດໜູນບໍານານ ຢູ່ທັງພາກລັດ ແລະ ພາກວິສາຫະກິດ ຫຼື ຜູ້ສະໝັກໃຈ ມາກ່ອນແລ້ວແມ່ນໃຫ້ສືບຕໍ່ຮັບຕໍ່ໄປ, ກໍລະນີ ເສຍຊີວິດ ການຄິດໄລ່ເງິນອຸດໜູນເສຍຊີວິດແມ່ນໃຫ້ຄິດໄລ່ຕາມພາກລັດ, ສ່ວນພາກວິສາຫະກິດແມ່ນໃຫ້ຄິດໄລ່ເທົ່າກັບ 15 ເດືອນຂອງເງິນບໍານານເດືອນສຸດທ້າຍຂອງຜູ້ກ່ຽວ.

8. ມາດຕາ 41 ແລະ 64 ເງື່ອນໄຂຮັບການອຸດໜູນສະມາຊິກຄອບຄົວ (ແນະນໍາໃໝ່)

- ກໍລະນີ ພໍ່ແມ່ ໄດ້ເປັນຜູ້ປະກັນຕົນທັງສອງ ຢູ່ພາກດຽວກັນ ຫຼື ຢູ່ຄົນລະພາກ ຫາກຜູ້ໃດໜຶ່ງເສຍຊີວິດ ລູກຄີງ, ລູກລ້ຽງ ຫຼື ລູກນ້າ ຈະໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ຈົນເຖິງ ສິບແປດປີ, ສໍາລັບ ລູກທີ່ເປັນຄົນພິການ ຫຼື ເສຍຈິດ ມາແຕ່ກໍາເນີດ ຫຼື ໄລຍະຫຼັງກໍາເນີດ ຫາ ສິບແປດປີ ທີ່ບໍ່ສາມາດເຮັດວຽກ ຫຼື ບໍ່ມີລາຍໄດ້ໃດໜຶ່ງ ຈະໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ຕະຫຼອດຊີວິດ, ກໍລະນີພໍ່ແມ່ເສຍຊີວິດທັງສອງ ແມ່ນສາມາດເລືອກຮັບເອົານໍາສິດຂອງພໍ່ ຫຼື ແມ່ ທີ່ມີເງິນເດືອນປະກັນຕົນສູງກວ່ານັ້ນໄດ້;

- ກໍລະນີ ເມຍຜູ້ປະກັນຕົນທີ່ມີອາຍຸຖືພາໄດ້ ຫົກເດືອນ ຫຼື ຊາວສີ່ອາທິດ ຂຶ້ນໄປ ກ່ອນຜູ້ປະກັນຕົນເສຍຊີວິດ ລູກທີ່ເກີດມາແມ່ນມີສິດໄດ້ຮັບການອຸດໜູນສະມາຊິກຄອບຄົວ;

- ພາຍຫຼັງທີ່ໄດ້ຮັບການອຸດໜູນສະມາຊິກຄອບຄົວ ຕ້ອງໄດ້ພິຈາລະນາເງື່ອນໄຂການຮັບອຸດໜູນຄືນ ຢ່າງໜ້ອຍສອງປີຕໍ່ຄັ້ງ, ໂດຍຜູ້ຮັບອຸດໜູນດັ່ງກ່າວຕ້ອງມາສະເໜີຕໍ່ອົງການປະກັນສັງຄົມ ພ້ອມດ້ວຍເອກະສານຢັ້ງຢືນສະຖານະຄອບຄົວ ຕາມແບບທີ່ອົງການປະກັນສັງຄົມແຫ່ງຊາດ ກໍານົດໄວ້, ຫາກບໍ່ມີການຢັ້ງຢືນ ຫຼື ບໍ່ມາພົບພະນັກງານປະກັນສັງຄົມ ຕາມກໍານົດເວລາດັ່ງກ່າວ ແມ່ນຈະໂຈະເງິນອຸດໜູນສະມາຊິກຄອບຄົວໄວ້ຊົ່ວຄາວ ຈົນກວ່າຈະມີການຢັ້ງຢືນເງື່ອນໄຂຄອບຄົວ ພາຍໃນ ຫົກເດືອນ ແມ່ນຈະຈ່າຍຍ້ອນຫຼັງໃຫ້, ຖ້າກາຍ ຫົກເດືອນ ຈະຈ່າຍນັບແຕ່ເດືອນທີ່ໄດ້ຮັບການຢັ້ງຢືນເງື່ອນໄຂຄືນໃໝ່ເປັນຕົ້ນໄປ; ຖ້າພົບເຫັນຂໍ້ມູນບໍ່ຖືກຕ້ອງຕາມເງື່ອນໄຂຂອງການອຸດໜູນສະມາຊິກຄອບຄົວ ແມ່ນຈະຖືເປັນການສິ້ນສຸດການຮັບອຸດໜູນດັ່ງກ່າວ.

**9. ມາດຕາ 42 ແລະ 65 (ປັບປຸງ) ການຄິດໄລ່ເງິນອຸດໜູນສະມາຊິກຄອບຄົວ (ແນະນໍາໃໝ່)**

ກໍລະນີຜູ້ປະກັນຕົນພາກລັດຫາກເສຍຊີວິດ ການຄິດໄລ່ເງິນອຸດໜູນສະມາຊິກຄອບຄົວ ແມ່ນໃຫ້ເອົາເງິນເດືອນສຸດທ້າຍຂອງຜູ້ເສຍຊີວິດ, ສໍາລັບພາກວິສາຫະກິດແມ່ນໃຫ້ເອົາເງິນເດືອນປະກັນຕົນ ຫົກເດືອນສຸດທ້າຍມາສະເລ່ຍ, ກໍລະນີຜູ້ບໍານານ ແລະ ຜູ້ເສຍກໍາລັງແຮງງານ ຫາກເສຍຊີວິດ ທັງພາກລັດ ແລະ ພາກວິສາຫະກິດ ແມ່ນໃຫ້ເອົາເງິນເດືອນສຸດທ້າຍຂອງຜູ້ເສຍຊີວິດ ເປັນພື້ນຖານຄິດໄລ່ເງິນອຸດໜູນສະມາຊິກຄອບຄົວ.

**10. ມາດຕາ 58 ເງື່ອນໄຂຮັບການອຸດໜູນບໍານານ (ແນະນໍາໃໝ່)**

- ຜູ້ປະກັນຕົນ ຫາກໄດ້ມອບເງິນສົມທົບຢ່າງຕໍ່ເນື່ອງ ຫຼື ຂາດການມອບເງິນສົມທົບບໍ່ເກີນ ໜຶ່ງປີ ອາຍຸຜູ້ກ່ຽວຄົບ 52 ປີ ຂຶ້ນໄປ (ສໍາລັບ ເພດຍິງ) ແລະ 57 ປີຂຶ້ນໄປ (ສໍາລັບ ເພດຊາຍ) ແມ່ນສາມາດພິຈາລະນາຮັບການອຸດໜູນບໍານານໄດ້;

- ກໍລະນີຂາດການມອບເງິນສົມທົບເປັນເວລາຫຼາຍກວ່າ ໜຶ່ງປີ ຕ້ອງມີອາຍຸກະສຽນຄົບ 55 ປີ ຂຶ້ນໄປ (ສໍາລັບເພດຍິງ) ແລະ 60 ປີຂຶ້ນໄປ (ສໍາລັບ ເພດຊາຍ) ຈຶ່ງສາມາດຂໍຮັບການອຸດໜູນບໍານານ;

- ຜູ້ປະກັນຕົນ ທີ່ໄດ້ເຮັດວຽກຢູ່ພາກລັດ ຫຼື ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ເປັນບ່ອນສຸດທ້າຍ ແມ່ນຮັບການອຸດໜູນບໍານານ ຫຼື ອຸດໜູນເທື່ອດຽວ ຢູ່ພາກນັ້ນ ຍົກເວັ້ນກໍລະນີກົມກອງກ່ຽວຂ້ອງ ຫຼື ກົມກອງທີ່ຜູ້ກ່ຽວເຄີຍສັງກັດຢູ່ບ່ອນສຸດທ້າຍກ່ອນຍ້າຍໄປພາກວິສາຫະກິດ ຫາກອອກຂໍ້ຕົກລົງຮັບກັບຄືນ ຫຼື ອອກຂໍ້ຕົກລົງ ໃຫ້ຮັບການອຸດໜູນບໍານານ ແມ່ນຈະອະນຸມັດໃຫ້ຮັບການອຸດໜູນບໍານານຢູ່ພາກລັດໄດ້;

- ສໍາລັບຜູ້ປະກັນຕົນທີ່ເປັນຄົນລາວ ທີ່ມີເງື່ອນໄຂຈະໄດ້ຮັບເງິນອຸດໜູນເທື່ອດຽວ ຕ້ອງມີອາຍຸຄົບກະສຽນ 60 ປີ ທັງ ເພດຍິງ ແລະ ເພດຊາຍ, ຊຶ່ງໄລຍະປະກັນຕົນບໍ່ຄົບເງື່ອນໄຂການອຸດໜູນບໍານານ ແຕ່ຕ້ອງມີໄລຍະປະກັນຕົນ ຄົບສິບສອງເດືອນຂຶ້ນໄປ, ຫາກໄດ້ຮັບການອຸດໜູນດັ່ງກ່າວແລ້ວຈະຖືເປັນການສິ້ນສຸດໄລຍະປະກັນຕົນ;

- ສໍາລັບຜູ້ປະກັນຕົນທີ່ເປັນຄົນຕ່າງປະເທດ ທີ່ມີເງື່ອນໄຂຈະໄດ້ຮັບເງິນອຸດໜູນເທື່ອດຽວ ແມ່ນຜູ້ທີ່ສິ້ນສຸດສັນຍາແຮງງານ, ໄດ້ກັບຄືນປະເທດ ແລະ ມີໄລຍະປະກັນຕົນ ຄົບສິບສອງເດືອນຂຶ້ນໄປ. ຫາກໄດ້ຮັບການອຸດໜູນດັ່ງກ່າວແລ້ວຈະຖືເປັນການສິ້ນສຸດໄລຍະປະກັນຕົນ.

**11. ມາດຕາ 59 ການຄິດໄລ່ເງິນອຸດໜູນບໍານານ (ປັບປຸງ)**

1) ການຄິດໄລ່ຄະແນນບໍານານ:

ຄະແນນບຳນານທັງໝົດ ແມ່ນຄະແນນບຳນານຈາກການຈ່າຍເງິນສົມທົບທັງໝົດ ບວກ ຄະແນນບຳນານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ບວກ ຄະແນນບຳນານນະໂຍບາຍ ຊຶ່ງມີການຄິດໄລ່ແຕ່ລະປະເພດຄະແນນບຳນານ ດັ່ງນີ້:

- ຄະແນນບຳນານຈາກການຈ່າຍເງິນສົມທົບ ແມ່ນຈຳນວນເງິນປະກັນຕົນສະເລ່ຍ ຂອງຜູ້ກ່ຽວ ໃນແຕ່ລະປີ ຫານ ໃຫ້ຈຳນວນເງິນປະກັນຕົນສະເລ່ຍ ຂອງຜູ້ປະກັນຕົນທັງໝົດ ໃນໄລຍະເວລາດຽວກັນ;

<u>**ຕົວຢ່າງ:**</u> ນາງ ສ ມີເງິນປະກັນຕົນສະເລ່ຍໃນປີເທົ່າກັບ 3.000.000 ກີບ, ເງິນປະກັນຕົນສະເລ່ຍຂອງຜູ້ປະກັນຕົນທັງໝົດແມ່ນ 2.350.000 ກີບ, ຄະແນນບຳນານໃນປີນັ້ນເທົ່າກັບ:

= 3.000.000 ກີບ ÷ 2.350.000 ກີບ = 1,277 ຄະແນນ/ປີ.

- ຄະແນນບຳນານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ໃນເວລາຮັບອຸດໜູນປ່ວຍການ ຫຼື ອຸດໜູນອອກ ລູກ ແມ່ນຄະແນນບຳນານຈາກການຈ່າຍເງິນສົມທົບສະເລ່ຍໃນໄລຍະ ຊາວສີ່ເດືອນ ກ່ອນໄດ້ຮັບເງິນອຸດໜູນ ຫານໃຫ້ ສາມສິບວັນ ຄູນ ກັບຈຳນວນວັນພັກ ຮັບເງິນອຸດໜູນ;

<u>**ຕົວຢ່າງ:**</u> ນາງ ສ ມີຄະແນນບຳນານ 2,554 ໃນໄລຍະ ຊາວສີ່ເດືອນ, ມີວັນພັກປ່ວຍການ ສີ່ສິບຫ້າວັນ ການຄິດໄລ່ເທົ່າກັບ:[(2,554 ÷ 24) ÷ 30] x 45 = 0,160 ຄະແນນ.

- ຄະແນນບຳນານນະໂຍບາຍ ແມ່ນຄະແນນທີ່ຄິດໄລ່ໃຫ້ຜູ້ທີ່ເລີ່ມຕົ້ນເຂົ້າປະຕົນ ທີ່ມີອາຍຸກະສຽນ ເກີນ ສາມສິບປີຂຶ້ນໄປ ໃຫ້ຄິດໄລ່ເທົ່າກັບ 0,8 ຄະແນນ ຄູນກັບຈຳນວນປີທີ່ອາຍຸເກີນ ຄະແນນບຳນານນະໂຍບາຍດັ່ງກ່າວຄິດໄລ່ໃຫ້ບໍ່ເກີນ 12 ຄະແນນ, ສຳລັບຜູ້ທີ່ເຄີຍເປັນພະນັກງານລັດມາກ່ອນ ເມື່ອອາຍຸຮອດສາມສິບປີແລ້ວຈຶ່ງມາເຂົ້າປະກັນສັງຄົມພາກວິສາຫະກິດ ແມ່ນຈະບໍ່ໄດ້ຮັບຄະແນນບຳນານນະໂຍບາຍນີ້.

<u>**ຕົວຢ່າງ:**</u> ນາງ ສ ມີອາຍຸກະສຽນ 40 ປີ ຕອນທີ່ຜູ້ກ່ຽວເລີ່ມເຂົ້າປະກັນຕົນ ຄະແນນບຳນານນະໂຍບາຍຄິດໄລ່ ດັ່ງນີ້: (40 ປີ – 30 ປີ) x 0,8 ຄະແນນ = 8 ຄະແນນ.

2) ເງິນເດືອນປະກັນຕົນສະເລ່ຍຄາດຄະເນ

ເງິນປະກັນຕົນສະເລ່ຍຂອງຜູ້ປະກັນຕົນໃນປີ ແມ່ນເອົາເງິນປະກັນຕົນຂອງຜູ້ກ່ຽວທີ່ມີໃນແຕ່ລະເດືອນຂອງປີດັ່ງກ່າວ ບວກກັນ ແລ້ວຫານໃຫ້ ສິບສອງ, ສຳລັບ ຜູ້ທີ່ໄດ້ມອບເງິນສົມທົບຢູ່ກັບຫຼາຍຫົວໜ່ວຍວິສາຫະກິດໃນເວລາດຽວກັນ, ໃຫ້ເອົາເງິນສົມທົບຈາກແຫຼ່ງຕ່າງໆ ບວກເຂົ້າກັນ ແຕ່ສູງສຸດບໍ່ໃຫ້ເກີນເພດານເງິນປະກັນຕົນແຕ່ລະໄລຍະ ເພື່ອເປັນບ່ອນອີງໃນການຄິດໄລ່ເງິນອຸດໜູນ;

ເງິນປະກັນຕົນສະເລ່ຍຄາດຄະເນ ຂອງຜູ້ປະກັນຕົນທັງໝົດ ແມ່ນຈຳນວນເງິນປະກັນຕົນສະເລ່ຍທັງໝົດໃນໄລຍະຫົກເດືອນທ້າຍປີຜ່ານມາ ຫາ ໄລຍະຫົກເດືອນຕົ້ນປີ ບວກອັດຕາການເໜັງຕີງ ສົມທຽບໃສ່ໄລຍະສິບສອງເດືອນກ່ອນໜ້ານັ້ນ, ສຳລັບປີທີ່ມີການປັບປຸງເພດານເງິນປະກັນຕົນສູງສຸດ ຫຼື ປີທີ່ອັດຕາການເໜັງຕີງຂອງເງິນເດືອນປະກັນຕົນສະເລ່ຍ ຫຼຸດ ຫຼື ລື່ນ ໄລຍະຜ່ານມາຫຼາຍ ແມ່ນຈະມີວິທີການຄິດໄລ່ຕ່າງຫາກໃຫ້ໃກ້ຄຽງກັບເງິນເດືອນສະເລ່ຍຕົວຈິງໃນໄລຍະນັ້ນ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ຜູ້ປະກັນຕົນ ແລະ ກອງທຶນ.

3) ການຄິດໄລ່ເງິນອຸດໜູນບຳນານ:

ໃຫ້ເອົາຄະແນນບຳນານທັງໝົດຂອງຜູ້ກ່ຽວ ຄູນ ກັບເງິນເດືອນປະກັນຕົນສະເລ່ຍຄາດຄະເນ ຂອງຜູ້ປະກັນຕົນທັງໝົດ ຄູນ ຕົວດັດສະນີ ສອງສ່ວນຮ້ອຍ (2%).

<u>**ຕົວຢ່າງ:**</u> ນາງ ສ ມີປີການ 20 ປີ, ຖ້າຄະແນນບຳນານຂອງຜູ້ກ່ຽວໃນແຕ່ລະປີແມ່ນ 1,277 ຄະແນນ, ຄະແນນບຳນານຈາກການຈ່າຍເງິນສົມທົບທັງໝົດຂອງຜູ້ກ່ຽວ ເທົ່າກັບ: 1,277 x 20 ປີ= 25,540 ຄະແນນ, ຄະແນນບຳນານທັງໝົດເທົ່າກັບ: 25,540 + 0,160 + 8 = 33,700 ຄະແນນ;

ເງິນບຳນານ ເທົ່າກັບ: 33,700 ຄະແນນ x 2.350.000 ກີບ x 2% =1.583.900 ກີບ/ເດືອນ.

4) <u>**ການກຳນົດເພດານເງິນອຸດໜູນບຳນານ**</u>

- ກໍລະນີ ເງິນອຸດໜູນບຳນານ ຕ່ຳກ່ວາຄ່າແຮງງານຂັ້ນຕ່ຳສຸດ ຂອງພາກວິສາຫະກິດ ແມ່ນໃຫ້ເອົາຜົນການຄິດ

ໄລ່ເງິນອຸດໜູນຕົວຈິງເປັນພື້ນຖານ ໃນການເບີກຈ່າຍເງິນອຸດໜູນບໍານານໃຫ້ຜູ້ກ່ຽວ ໂດຍບໍ່ໃຫ້ເອົາມາທຽບກັບເພດານເງິນບໍານານສູງສຸດ 75% ຂອງເງິນເດືອນປະກັນຕົນສະເລ່ຍ ໃນໄລຍະ ຊາວສີ່ເດືອນສຸດທ້າຍ;

- ຜົນການຄິດໄລ່ເງິນບໍານານ ຫາກສູງກວ່າຄ່າແຮງງານຂັ້ນຕໍ່າສຸດ ຂອງພາກວິສາຫະກິດ ແຕ່ເພດານ 75% ຂອງເງິນເດືອນປະກັນຕົນສະເລ່ຍ ໃນໄລຍະ ຊາວສີ່ເດືອນສຸດທ້າຍ ຫາກຕໍ່າກວ່າຄ່າແຮງງານຂັ້ນຕໍ່າ ແມ່ນໃຫ້ເອົາຄ່າແຮງງານຂັ້ນຕໍ່າເປັນບ່ອນອີງໃນການຈ່າຍ;
- ກໍລະນີ ເງິນອຸດໜູນບໍານານ ສູງກ່ວາຄ່າແຮງງານຂັ້ນຕໍ່າສຸດ ຂອງພາກວິສາຫະກິດ ແມ່ນສູງສຸດບໍ່ໃຫ້ເກີນເຈັດສິບຫ້າ ສ່ວນຮ້ອຍ (75%) ຂອງເງິນເດືອນປະກັນຕົນສະເລ່ຍ ໃນໄລຍະ ຊາວສີ່ເດືອນສຸດທ້າຍ ຂອງຜູ້ກ່ຽວກ່ອນການຮ້ອງຂໍອຸດໜູນບໍານານ;
- ການສົມທຽບດັ່ງກ່າວ ແມ່ນໃຫ້ປະຕິບັດສະເພາະໃນເວລາອະນຸມັດເບື້ອງຕົ້ນ ຫຼື ຄັ້ງທໍາອິດເທົ່ານັ້ນ, ສໍາລັບການດັດປັບເງິນອຸດໜູນບໍານານໃນແຕ່ລະປີແມ່ນບໍ່ມີການສົມທຽບຄືນອີກ.

12. ມາດຕາ 66 (ປັບປຸງ) ເງື່ອນໄຂຮັບການອຸດໜູນວ່າງງານ (ແນະນໍາໃໝ່)

- ເງື່ອນໄຂ ຮັບການອຸດໜູນວ່າງງານ ມີດັ່ງນີ້:

1) ໄດ້ມອບເງິນສົມທົບ ເຂົ້າກອງທຶນປະກັນສັງຄົມ ແຕ່ ສິບສອງເດືອນຂຶ້ນໄປ ພາຍໃນ ຊາວສີ່ເດືອນຄືນຫຼັງກ່ອນອອກຈາກວຽກ, ສໍາລັບຜູ້ທີ່ໄດ້ຮັບການອຸດໜູນວ່າງງານມາກ່ອນ ຕ້ອງສະສົມເງິນສົມທົບຕື່ມອີກ ສິບສອງເດືອນຂຶ້ນໄປ ຈຶ່ງສາມາດໄດ້ຮັບເງິນອຸດໜູນວ່າງງານຄັ້ງໃໝ່;

2) ວ່າງງານ ຍ້ອນການລົ້ມລະລາຍຂອງຫົວໜ່ວຍແຮງງານ, ຢຸດກິດຈະການ ຫຼື ສິ້ນສຸດໂຄງການຊ່ວຍເຫຼືອເພື່ອການພັດທະນາ ຢ່າງຖາວອນ;

3) ວ່າງງານ ຍ້ອນການຢຸດກິດຈະການຊົ່ວຄາວ ຈາກຜົນກະທົບຂອງໄພພິບັດ;

4) ວ່າງງານ ຍ້ອນຄວາມຕ້ອງການ ຫຼຸດຈໍານວນແຮງງານ ຫຼື ການລະດົມໃຫ້ອອກຈາກວຽກ ເນື່ອງຈາກວິກິດການທາງດ້ານການເງິນ ໂດຍມີການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ;

5) ມີສຸຂະພາບແຂງແຮງ ແລະ ສາມາດກັບເຂົ້າສູ່ຕະຫຼາດແຮງງານ;

6) ວ່າງງານແຕ່ ສາມສິບວັນຂຶ້ນໄປ ໂດຍມີການຢັ້ງຢືນຈາກກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ;

  - ຜູ້ປະກັນຕົນ ທີ່ອອກຈາກວຽກ ຕ້ອງຂຶ້ນທະບຽນວ່າງງານ ພາຍໃນ ສາມສິບວັນ ນັບຈາກມື້ອອກຈາກວຽກເປັນຕົ້ນໄປ ຈຶ່ງຈະສາມາດຂໍຮັບການອຸດໜູນວ່າງງານໄດ້ຕາມເງື່ອນໄຂ, ພາຍຫຼັງການຂຶ້ນທະບຽນແລ້ວຕ້ອງຄົບ ສາມສິບວັນຂຶ້ນໄປ ຈຶ່ງຈະໄດ້ຮັບໃບຢັ້ງຢືນວ່າງງານ ຈາກພາກສ່ວນທີ່ກ່ຽວຂ້ອງ;
  - ສໍາລັບຜູ້ປະກັນຕົນທີ່ໄດ້ຮັບການອຸດໜູນວ່າງງານຄັ້ງທີຜ່ານມາແລ້ວ ແຕ່ພາຍໃນ ສາມສິບວັນຕໍ່ມາຍັງບໍ່ສາມາດຊອກວຽກໄດ້ ການຂໍອຸດໜູນວ່າງງານຄັ້ງຕໍ່ໄປ ຕ້ອງໄດ້ຮັບການຢັ້ງຢືນການວ່າງງານຢ່າງຕໍ່ເນື່ອງເປັນແຕ່ລະເດືອນ ຈາກພາກສ່ວນກ່ຽວຂ້ອງ ແລະ ຕ້ອງຍື່ນເອກະສານບໍ່ໃຫ້ກາຍ 45 ວັນ ໂດຍນັບຈາກການຮັບອຸດໜູນວ່າງງານຄັ້ງທີ່ຜ່ານມາ ຫາກກາຍກໍານົດດັ່ງກ່າວຖືວ່າເປັນການສິ້ນສຸດການຮັບອຸດໜູນວ່າງງານ.

- ເງື່ອນໄຂ ທີ່ບໍ່ໄດ້ຮັບການອຸດໜູນວ່າງງານ ມີດັ່ງນີ້:

1) ເຮັດວຽກຕາມລະດູການ ຫຼື ຕາມຜະລິດຕະພັນ;

2) ລະເມີດສັນຍາແຮງງານ ຫຼື ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ;

3) ສະໝັກໃຈລາອອກດ້ວຍເຫດຜົນຕ່າງໆ;

4) ຜູ້ປະກັນຕົນທີ່ຢູ່ໃນໄລຍະຮັບການອຸດໜູນປະກັນສັງຄົມ ແລະ ຜູ້ຄົບເງື່ອນໄຂຮັບອຸດໜູນບໍານານ;

5) ໄລຍະພັກແລ້ງຂອງຄູ ໃນໂຮງຮຽນຂອງເອກະຊົນ;

6) ສິ້ນສຸດສັນຍາແຮງງານ ລະຫວ່າງ ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ.

- ເອກະສານປະກອບໃນການຂໍອຸດໜູນວ່າງງານ

1) ເອກະສານຢັ້ງຢືນ ການອອກວຽກຈາກຫົວໜ່ວຍແຮງງານ ທີ່ກ່ຽວຂ້ອງຢ່າງຖືກຕ້ອງ;

2) ສັນຍາແຮງງານ;

3) ໃບແຈ້ງປົດປ່ອຍລວມ ໂດຍມີລາຍເຊັນຢັ້ງຢືນຂອງຜູ້ໃຊ້ແຮງງານ (ສະບັບສຳເນົາ);

ຖ້າປົດປ່ອຍອອກໃນເງື່ອນໄຂການລະດົມໃຫ້ອອກ ຕ້ອງມີຂໍ້ຕົກລົງ ຫຼື ມະຕິຕົກລົງ ຫຼື ແຈ້ງການ ຫຼື ບົດລາຍງານ ຂອງຜູ້ໃຊ້ແຮງງານ ຫຼື ເອກະສານຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງທີ່ຫົວໜ່ວຍແຮງງານຂຶ້ນກັບປະກອບເພີ່ມເຕີມ;

4) ໃບປົດປ່ອຍສະເພາະບຸກຄົນ ໂດຍມີລາຍເຊັນຢັ້ງຢືນຂອງຜູ້ໃຊ້ແຮງງານ (ສະບັບຕົ້ນ);

5) ເອກະສານອື່ນໆ ທີ່ລະບຸຢູ່ໃນແບບຟອມການຮ້ອງຂໍອຸດໜູນວ່າງງານ.

13. **ມາດຕາ 75 ການມອບເງິນສົມທົບ (ປັບປຸງ)**

1) ຜູ້ປະກັນຕົນທີ່ໄດ້ມອບເງິນສົມທົບ ຢູ່ພາກລັດ ແລະ ພາກວິສາຫະກິດ ໃນເວລາດຽວກັນ ໃຫ້ປະຕິບັດ ດັ່ງນີ້:

- ໃຫ້ສືບຕໍ່ມອບເງິນສົມທົບຢູ່ພາກລັດ ແລະ ຢຸດການມອບເງິນສົມທົບຢູ່ພາກວິສາຫະກິດ. ສຳລັບເງິນສົມທົບທີ່ໄດ້ມອບໄປແລ້ວນັ້ນ ແມ່ນຈະຖືກເກັບໄວ້ຢູ່ກອງທຶນປະກັນສັງຄົມ ຈົນກວ່າເຖິງອາຍຸກະສຽນບຳນານ ຫຼື ເສຍຊີວິດ ຈຶ່ງຈະສົ່ງເງິນສົມທົບນັ້ນຄືນ ຍົກເວັ້ນກອງທຶນອຸດໜູນການປິ່ນປົວສຸຂະພາບ;

- ສຳລັບຜູ້ທີ່ບໍ່ສາມາດຢຸດການມອບເງິນສົມທົບ ເນື່ອງຈາກລະບົບການຈ່າຍເງິນເດືອນຂອງຫົວໜ່ວຍວິສາຫະກິດ ແມ່ນໃຫ້ສືບຕໍ່ມອບເງິນສົມທົບ ເພື່ອສະສົມໄປຈົນເຖິງເວລາອອກຮັບອຸດໜູນບຳນານ ຫຼື ເສຍຊີວິດ ຈຶ່ງຈະສົ່ງເງິນສົມທົບນັ້ນຄືນ ຍົກເວັ້ນກອງທຶນອຸດໜູນການປິ່ນປົວສຸຂະພາບ;

2) ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ທີ່ມີເງິນເດືອນລະຫວ່າງຄ່າແຮງງານຂັ້ນຕໍ່າສຸດ ທີ່ລັດຖະບານກຳນົດຫາເພດານເງິນເດືອນປະກັນຕົນສູງສຸດ ໃຫ້ເອົາເງິນເດືອນຕົວຈິງທີ່ໄດ້ຮັບເປັນບ່ອນອີງໃນການຄິດໄລ່ເງິນສົມທົບ;

ກໍລະນີ ເງິນເດືອນຂອງຜູ້ອອກແຮງງານຫາກຫຼຸດລະດັບຄ່າແຮງງານຂັ້ນຕໍ່າສຸດ ເນື່ອງຈາກເຮັດວຽກບໍ່ເຕັມເວລາ ຍ້ອນເຂົ້າວຽກໃໝ່ ຫຼື ອອກວຽກ ຫຼື ມີການເຈັບປ່ວຍ, ອອກລູກ ແມ່ນສາມາດເອົາມາເປັນບ່ອນອີງໃນການຄິດໄລ່ເງິນສົມທົບ ແຕ່ບໍ່ຫຼຸດ 25% ຂອງຄ່າແຮງງານຂັ້ນຕໍ່າ ທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ, ກໍລະນີຖ້າຫາກຫຼຸດ ແມ່ນບໍ່ໃຫ້ຄິດໄລ່ເຂົ້າເປັນໄລຍະປະກັນຕົນ ແລະ ບໍ່ໃຫ້ລວມເຂົ້າໃນການຄິດໄລ່ເງິນອຸດໜູນປະເພດຕ່າງໆ, ສ່ວນເງິນທີ່ສົມທົບນັ້ນແມ່ນຈະສະສົມໄວ້ເພື່ອຄິດໄລ່ເປັນຄະແນນບຳນານ;

ກໍລະນີ ຫົວໜ່ວຍແຮງງານໃດໜຶ່ງຫາກຄ້າງມອບເງິນສົມທົບ ເກີນ ຫົກເດືອນ ຜູ້ປະກັນຕົນທຸກຄົນໃນຫົວໜ່ວຍແຮງງານດັ່ງກ່າວ ຈະຖືກໂຈະການບໍ່ເກີດສິດໃນການຮັບການອຸດໜູນປະກັນສັງຄົມປະເພດຕ່າງໆ ໄວ້ຊົ່ວຄາວ ຈົນກວ່າຈະມີການມອບເງິນສົມທົບເຂົ້າມາຄືນຄົບທຸກເດືອນທີ່ໄດ້ຄ້າງມອບນັ້ນ ຈຶ່ງຈະເກີດສິດຕາມເງື່ອນໄຂແຕ່ລະການອຸດໜູນທີ່ກຳນົດໄວ້.

- **ການມອບເງິນສົມທົບຂອງຜູ້ສະໝັກໃຈ**

- ການມອບເງິນສົມທົບເຂົ້າປະກັນສັງຄົມ ຕ້ອງມອບເປັນປະຈຳໃນທຸກໆທ້າຍເດືອນ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນທັດໄປ;

- ການມອບເງິນສົມທົບ ແມ່ນສາມາດມອບລ່ວງໜ້າໄດ້ແຕ່ບໍ່ໃຫ້ເກີນອາຍຸສັນຍາ, ຊຶ່ງມອບເຂົ້າບັນຊີເງິນຝາກຂອງອົງການປະກັນສັງຄົມແຫ່ງຊາດ ຫຼື ມອບຢູ່ຫ້ອງການປະກັນສັງຄົມ ຢູ່ແຕ່ລະຂັ້ນຄຸ້ມຄອງ ແລະ ຫາກມອບເປັນເງິນສົດ ສູງສຸດບໍ່ໃຫ້ເກີນ ຫ້າລ້ານກີບ;

- ສາມາດມອບເງິນສົມທົບຊ້າໄດ້ບໍ່ເກີນສາມເດືອນ ຖ້າກາຍກຳນົດດັ່ງກ່າວລະບົບຈະໄດ້ໂຈະການເກີດສິດອຸດໜູນປະເພດຕ່າງໆໄວ້ຊົ່ວຄາວຈົນກວ່າຈະມີການມອບເງິນຄືນຄົບຕາມຈຳນວນເດືອນທີ່ຄ້າງມອບແລ້ວຈຶ່ງເກີດສິດອຸດໜູນຕ່າງໆຕາມລະບຽບການທີ່ກຳນົດໄວ້;

- ຜູ້ປະກັນຕົນສະໝັກໃຈ ທີ່ເຄີຍມອບເງິນສົມທົບ ໃນຂະນະດຽວກັນຜູ້ກ່ຽວຫາກເກີດສິດຮັບການອຸດໜູນ

ເສຍອົງຄະຣາກຖານ, ອຸດໜູນບໍານານຄືນ, ແມ່ນຈະສົ່ງເງິນສົມທົບທີ່ໄດ້ມອບຜ່ານມານັ້ນຄືນໃຫ້ກັບຜູ້ກ່ຽວ ຍົກເວັ້ນເງິນສົມທົບສໍາລັບກອງທຶນການອຸດໜູນປິ່ນປົວສຸຂະພາບ; ກໍລະນີຜູ້ກ່ຽວມີຈຸດປະສົງຢາກສືບຕໍ່ປະກັນຕົນສະໝັກໃຈ ແມ່ນຕ້ອງຢຸດການຮັບອຸດໜູນດັ່ງກ່າວ ໂດຍມີການສະເໜີເປັນລາຍລັກອັກສອນ;

- ຜູ້ປະກັນຕົນສະໝັກໃຈ ທີ່ຮັບການອຸດໜູນອອກລູກ ແມ່ນໃຫ້ໂຈະການມອບເງິນສົມທົບໄດ້ຈໍານວນ ສາມເດືອນ, ກໍລະນີຜູ້ມີລູກແຝດ ໃຫ້ໂຈະການມອບເງິນສົມທົບ ສີ່ເດືອນ, ສໍາລັບຜູ້ຮັບການອຸດໜູນປ່ວຍການ ຫາກມີຈໍານວນວັນພັກຍ້ອນເຈັບປ່ວຍທີ່ມີການຢັ້ງຢືນຈາກແພດ ເກີນ 15 ວັນ ຂຶ້ນໄປ ແມ່ນສາມາດໂຈະການມອບເງິນສົມ ທົບໃນເດືອນນັ້ນໄດ້;

- ຜູ້ປະກັນຕົນສະໝັກໃຈ ທີ່ມີການຄ້າງຈ່າຍເງິນສົມທົບຕາມສັນຍາ ຕ້ອງໄດ້ມອບເງິນສົມທົບຍ້ອນຫຼັງຕາມຈໍານວນເດືອນທີ່ຄ້າງຈ່າຍນັ້ນໃຫ້ຄົບຖ້ວນ ແຕ່ໄລຍະທີ່ມອບເງິນສົມທົບຍ້ອນຫຼັງ ຫາກກາຍ ຫົກເດືອນ ແມ່ນຈະບໍ່ຖືເປັນເງື່ອນໄຂໃນການຮັບອຸດໜູນໄລຍະສັ້ນທີ່ເກີດຂຶ້ນກ່ອນການມອບເງິນສົມທົບຍ້ອນຫຼັງດັ່ງກ່າວ;

- ຜູ້ປະກັນຕົນສະໝັກໃຈ ເວລາຂໍອຸດໜູນບໍານານ ຫາກມີການຄ້າງມອບເງິນສົມທົບ ຕ້ອງຊໍາລະຄືນໃຫ້ຄົບຖ້ວນແລ້ວຈຶ່ງຈະດໍາເນີນການຄິດໄລ່ ແລະ ເບີກຈ່າຍໃຫ້ໄດ້;

- ຜູ້ປະກັນຕົນສະໝັກໃຈທີ່ຍັງປະຕິບັດສັນຍາຢູ່ ຫາກຄົບເງື່ອນໄຂຮັບອຸດໜູນບໍານານ ສາມາດຂໍຮັບອຸດໜູນບໍານານໄດ້ເລີຍ ໂດຍບໍ່ຕ້ອງລໍຖ້າໃຫ້ໝົດສັນຍາ ແຕ່ຖ້າມີຈຸດປະສົງຢາກສືບຕໍ່ມອບເງິນສົມທົບໃຫ້ຄົບອາຍຸສັນຍາ ຫຼື ສືບຕໍ່ໄປອີກຫຼາຍສັນຍາກໍໄດ້;

- ຜູ້ປະກັນຕົນສະໝັກໃຈ ທີ່ກໍາລັງປະຕິບັດສັນຍາຢູ່ ແຕ່ມີອາຍຸຄົບ 52 ປີ ສໍາລັບເພດຍິງ ແລະ ອາຍຸຄົບ 57 ປີ ສໍາລັບເພດຊາຍ, ມີປີການຄົບເງື່ອນໄຂບໍານານ ຫາກມີຈຸດປະສົງຈະຂໍອຸດໜູນບໍານານກ່ອນຄົບກະສຽນອາຍຸ ຕ້ອງປະຕິບັດສັນຍາໃຫ້ສິ້ນສຸດກ່ອນ ຈຶ່ງຈະຢູ່ໃນເງື່ອນໄຂການຂໍອຸດໜູນບໍານານກ່ອນຄົບກະສຽນອາຍຸບໍານານໄດ້;

- ຜູ້ສະໝັກໃຈທີ່ໄດ້ມອບເງິນສົມທົບລ່ວງໜ້າ ຖ້າເກີດສິດຮັບອຸດໜູນປ່ວຍການ ຫຼື ອຸດໜູນອອກລູກ ເງິນສົມທົບດັ່ງກ່າວຈະເລື່ອນໄປເດືອນຖັດໄປ ຫຼັງຈາກຮັບອຸດໜູນດັ່ງກ່າວຄົບແລ້ວ, ຖ້າເກີດສິດຮັບອຸດໜູນເສຍຊີວິດ ເງິນສົມທົບທີ່ໄດ້ມອບລ່ວງໜ້າ ແມ່ນຈະສົ່ງຄືນ ຍົກເວັ້ນເງິນສົມທົບສໍາລັບກອງທຶນການອຸດໜູນປິ່ນປົວສຸຂະພາບ, ສ່ວນເງິນທີ່ໄດ້ມອບລ່ວງໜ້າທີ່ບໍ່ທັນຮັບເປັນເງິນສົມທົບແມ່ນຈະສົ່ງເງິນຄືນເຕັມ 9%.

**14. ມາດຕາ 90 ການຂຶ້ນທະບຽນປະກັນສັງຄົມ (ປັບປຸງ)**

ແມ່ນການຢັ້ງຢືນໃນການເຂົ້າຮ່ວມເປັນສະມາຊິກຂອງລະບົບປະກັນສັງຄົມ ຊຶ່ງປະກອບມີ ເປົ້າໝາຍເຂົ້າຮ່ວມລະບົບຕາມພັນທະຂອງກົດໝາຍ ແລະ ເປົ້າໝາຍເຂົ້າຮ່ວມລະບົບແບບສະໝັກໃຈ ດັ່ງນີ້:

1) **ກຸ່ມເປົ້າໝາຍ ແລະ ເງື່ອນໄຂ ເຂົ້າຮ່ວມລະບົບຕາມພັນທະຂອງກົດໝາຍ ປະກອບມີ:**

- ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ;
- ພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານບໍານານ, ຜູ້ເສຍອົງຄະ ແລະ ສະມາຊິກຄອບຄົວຂອງພວກກ່ຽວ;
- ຫົວໜ່ວຍແຮງງານຕ່າງໆລວມທັງຂອງລັດ ແລະ ເອກະຊົນ ທີ່ດໍາເນີນທຸລະກິດໃນທຸກຂົງເຂດ ເຊັ່ນ: ອຸດສະຫະກໍາ, ກະສິກໍາ ແລະ ການບໍລິການ;
- ຜູ້ອອກແຮງງານໃນຫົວໜ່ວຍແຮງງານໃດໜຶ່ງທີ່ມີເງິນເດືອນ ຫຼື ຄ່າແຮງງານ;
- ພະນັກງານຄົນລາວທີ່ເຮັດວຽກຢູ່ສະຖານທູດ, ກົງສູນ, ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ສັງກັດລັດຖະບານ ທີ່ປະຈໍາຢູ່ ສປປ ລາວ;
- ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກໃນຫົວໜ່ວຍແຮງງານໃດໜຶ່ງ ຊຶ່ງມີເງິນເດືອນ ຫຼື ຄ່າແຮງງານ ແລະ ມີໃບອະນຸຍາດເຮັດວຽກ ທີ່ຖືວິຊາ LA-B2;
- ກໍລະນີພົບເຫັນການຂຶ້ນທະບຽນ ແລະ ການຈ່າຍເງິນສົມທົບທີ່ຜິດພາດ ຂອງຄົນຕ່າງປະເທດທີ່ບໍ່ມີໃບອະນຸຍາດເຮັດວຽກ ທີ່ຖືວິຊາ LA-B2 ແລະ ຜູ້ກໍາລັງຮັບການອຸດໜູນໄລຍະຍາວ ຈາກອົງການປະກັນສັງຄົມແຫ່ງຊາດ

ຊຶ່ງໄດ້ມີການມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແລ້ວ ອົງການປະກັນສັງຄົມແຫ່ງຊາດ ຈະພິຈາລະນາໂຈະການເປັນຜູ້ປະກັນຕົນ ແລະ ສົ່ງເງິນສົມທົບຄືນ ຍົກເວັ້ນເງິນສົມທົບສໍາລັບກອງທຶນການອຸດໜູນປິ່ນປົວສຸຂະພາບ.

2) ກຸ່ມເປົ້າໝາຍ ແລະ ເງື່ອນໄຂ ເຂົ້າປະກັນຕົນແບບສະໝັກໃຈ

- **ເງື່ອນໄຂລວມ ຂອງການປະກັນຕົນແບບສະໝັກໃຈ**

- ຜູ້ປະກັນຕົນສະໝັກໃຈ ຕ້ອງປະກອບແບບຟອມ ແລະ ເຮັດສັນຍາຜູກພັນຕ່າງໆກັບ ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ ບ່ອນທີ່ຕົນເອງດໍາລົງຊີວິດ ຫຼື ເຮັດວຽກຢູ່;
- ການເຮັດສັນຍາປະກັນຕົນສະໝັກໃຈ ຢູ່ນອກສະຖານທີ່ ຈະສາມາດປະຕິບັດໄດ້ກໍ່ຕໍ່ເມື່ອໄດ້ຮັບການແຕ່ງຕັ້ງຈາກຫົວໜ້າອົງການປະກັນສັງຄົມແຫ່ງຊາດ;
- ຜູ້ທີ່ສະໝັກເຂົ້າລະບົບພາກສະໝັກໃຈ ຫາກອາໃສ, ດໍາລົງຊີວິດ ຫຼື ເຮັດວຽກ ຢູ່ແຂວງໃດແມ່ນໃຫ້ເຮັດສັນຍາຢູ່ແຂວງນັ້ນ, ຖ້າບຸກຄົນໃດທີ່ມີສໍາມະໂນຄົວ ຫຼື ບັດປະຈໍາຕົວບໍ່ອອກຢູ່ບ່ອນທີ່ຕົນເອງອາໃສຢູ່ ຕ້ອງມີເອກະສານຢັ້ງຢືນເພີ່ມເຕີມເຊັ່ນ: ໃບຢັ້ງຢືນທີ່ຢູ່ ຫຼື ໃບພັກເຊົາ;
- ສໍາລັບ ພະສົງ, ສໍາມະເນນ, ນັກບວດ, ແມ່ຂາວ ແລະ ຄົນຕ່າງປະເທດ ແມ່ນບໍ່ຢູ່ໃນເປົ້າໝາຍຜູ້ສະໝັກໃຈ;
- ການເສຍອົງຄະ, ພິການ ກ່ອນເຂົ້າເປັນສະມາຊິກປະກັນສັງຄົມ ຈະບໍ່ຖືເປັນເງື່ອນໄຂການເກີດສິດຮັບການອຸດໜູນເສຍອົງຄະ ໃນລະບົບປະກັນສັງຄົມ;
- ສັນຍາປະກັນຕົນສະໝັກໃຈແຕ່ລະຄັ້ງຈະມີອາຍຸ ຊາວສີ່ເດືອນ, ສັນຍາຈະສິ້ນສຸດລົງ ໃນກໍລະນີຜູ້ປະກັນຕົນສະໝັກໃຈ ຫາກໄດ້ຮັບການອຸດໜູນໄລຍະຍາວ, ເສຍຊີວິດ ຫຼື ໄດ້ກັບຄືນເຂົ້າເປັນຜູ້ປະກັນຕົນ ໃນລະບົບຫົວໜ່ວຍແຮງງານ.

- **ຜູ້ສະໝັກໃຈປະກັນຕົນ ທີ່ເຄີຍເປັນສະມາຊິກປະກັນສັງຄົມມາກ່ອນ**

- ຜູ້ປະກັນຕົນທີ່ອອກຈາກລະບົບຫົວໜ່ວຍແຮງງານ ແລະ ລະບົບສະໝັກໃຈ ທີ່ມີອາຍຸເກີນ 60 ປີ ສາມາດສືບຕໍ່ເຂົ້າຮ່ວມລະບົບສະໝັກໃຈໄດ້ ແຕ່ຕ້ອງມີໄລຍະການຢຸດຈ່າຍເງິນສົມທົບບໍ່ເກີນ ສາມເດືອນ ນັບແຕ່ເດືອນປະຈຸບັນຄືນຫຼັງ;
- ຜູ້ທີ່ເຄີຍເປັນສະມາຊິກປະກັນສັງຄົມມາກ່ອນ ແລະ ຍັງບໍ່ທັນໄດ້ເຮັດວຽກໃໝ່ ຫຼື ໄດ້ເຮັດວຽກຢູ່ຫົວໜ່ວຍແຮງງານທີ່ຍັງບໍ່ທັນເປັນສະມາຊິກປະກັນສັງຄົມ ຫຼື ບໍ່ໄດ້ຮັບອຸດໜູນໄລຍະຍາວໃດໜຶ່ງຈາກກອງທຶນປະກັນສັງຄົມ, ກໍລະນີໄດ້ມີການຢຸດຈ່າຍເງິນສົມທົບ ຫຼື ຢຸດຮັບການອຸດໜູນປະກັນສັງຄົມ ເກີນ ສາມເດືອນ ແມ່ນບໍ່ສາມາດຈ່າຍຍ້ອນຫຼັງ ໃຫ້ຈ່າຍໃນເດືອນປະຈຸບັນເປັນຕົ້ນໄປ;
- ຜູ້ສະໝັກໃຈ ທີ່ສິ້ນສຸດສັນຍາ ແລະ ມີການປະໄລຍະຫ່າງຂອງສັນຍາເກີນ ສາມເດືອນ ແມ່ນບໍ່ມີສິດມອບເງິນສົມທົບຍ້ອນຫຼັງ ໂດຍໃຫ້ເລີ່ມສັນຍາໃໝ່ໃນເດືອນປະຈຸບັນເປັນຕົ້ນໄປ, ສໍາລັບຜູ້ທີ່ຄ້າງມອບເງິນສົມທົບ ຕ້ອງຊໍາລະສັນຍາເກົ່າໃຫ້ຄົບຖ້ວນກ່ອນ ຈຶ່ງເລີ່ມເຮັດສັນຍາໃໝ່ໃນເດືອນປະຈຸບັນທີ່ຢູ່ເປັນຕົ້ນໄປ;
- ການເຮັດສັນຍາແຕ່ລະຄັ້ງ ຜູ້ກ່ຽວຕ້ອງມາດ້ວຍຕົນເອງ, ຍົກເວັ້ນ ກໍລະນີມາສືບຕໍ່ສັນຍາ ແລະ ບໍ່ມີການປ່ຽນແປງລະດັບເງິນປະກັນຕົນໃໝ່ ສາມາດໃຫ້ຜູ້ອື່ນເປັນຕົວແທນມາຕໍ່ສັນຍາໃຫ້ກໍໄດ້; ກໍລະນີ ຜູ້ປະກັນຕົນສະໝັກໃຈ ທີ່ໄປອາໃສຢູ່ຕ່າງປະເທດຊົ່ວຄາວ ເມື່ອສິ້ນສຸດສັນຍາແລ້ວ ແຕ່ມີຈຸດປະສົງຂໍສືບຕໍ່ສັນຍາ ແມ່ນໃຫ້ໂຈະໄວ້ຈົນກວ່າຜູ້ກ່ຽວກັບມາດໍາເນີນການຕໍ່ສັນຍາດ້ວຍຕົນເອງ ຈຶ່ງອະນຸຍາດໃຫ້ສືບຕໍ່ສັນຍາໄດ້;
- ຜູ້ທີ່ເຄີຍປະກັນຕົນມາກ່ອນຫາກມີໄລຍະການຢຸດມອບເງິນສົມທົບບໍ່ເກີນ ສາມເດືອນ ນັບແຕ່ເດືອນປະຈຸບັນຄືນຫຼັງແມ່ນສາມາດເລີ່ມສັນຍານັບຈາກເດືອນທີ່ຢຸດມອບເງິນສົມທົບໄດ້; ສ່ວນຜູ້ທີ່ມີໄລຍະການຢຸດມອບເງິນສົມທົບເກີນ ສາມເດືອນ ນັບແຕ່ເດືອນປະຈຸບັນຄືນຫຼັງ ແມ່ນເລີ່ມສັນຍາເດືອນປະຈຸບັນເປັນຕົ້ນໄປ;
- ຜູ້ສະໝັກໃຈທີ່ສືບຕໍ່ຈ່າຍ ຫຼື ຕໍ່ສັນຍາໃໝ່ ແມ່ນສາມາດເລືອກ ຫຼື ປ່ຽນລະດັບເງິນປະກັນຕົນໃໝ່ໄດ້ ແຕ່ບໍ່ໃຫ້ຫຼຸດ ຫຼື ເພີ່ມ ຫ້າສິບສ່ວນຮ້ອຍ (50%) ຈາກລະດັບເງິນປະກັນຕົນເກົ່າທີ່ເລືອກຜ່ານມາ ແຕ່ບໍ່ໃຫ້ຫຼຸດລະດັບເງິນປະກັນຕົນຕໍ່າສຸດຂອງພາກສະໝັກໃຈທີ່ກໍານົດໄວ້;

- ການເລືອກລະດັບເງິນປະກັນຕົນ ສໍາລັບຜູ້ທີ່ອອກຈາກຫົວໜ່ວຍແຮງງານທີ່ມີການມອບເງິນສົມທົບຜ່ານມາ ແມ່ນໃຫ້ເອົາເງິນປະກັນຕົນທີ່ມອບຢູ່ຫົວໜ່ວຍແຮງງານມາສະເລ່ຍ ຫົກເດືອນສຸດທ້າຍ ເປັນບ່ອນອີງໃນການກໍານົດເອົາເພດານປະກັນຕົນ, ຊຶ່ງຜູ້ກ່ຽວສາມາດເລືອກລະດັບເງິນປະກັນຕົນເທົ່າກັບຈໍານວນເງິນທີ່ໄດ້ສະເລ່ຍອອກມາໄດ້ ຫຼື ເລືອກລະດັບເງິນປະກັນຕົນຕໍ່າກວ່າເງິນທີ່ສະເລ່ຍອອກມານັ້ນ ແຕ່ບໍ່ໃຫ້ຫຼຸດລະດັບເງິນປະກັນຕົນຂັ້ນຕໍ່າສຸດຂອງພາກສະໝັກໃຈທີ່ກໍານົດໄວ້.

- **ຜູ້ປະກັນຕົນສະໝັກໃຈໃໝ່**

- ຜູ້ປະກອບອາຊີບສ່ວນບຸກຄົນ, ຜູ້ເຮັດວຽກໃຫ້ຕົນເອງ ໃນຂົງເຂດຕ່າງໆ ເປັນຕົ້ນຂົງເຂດກະສິກໍາ, ອຸດສາຫະກໍາ, ການຄ້າ ແລະ ການບໍລິການ ທີ່ມີອາຍຸກະສຽນ 14 ຫາ 60 ປີ, ມີສຸຂະພາບແຂງແຮງ, ສາມາດອອກແຮງງານໄດ້, ດໍາເນີນການເຮັດສັນຍາດ້ວຍຕົນເອງ ແລະ ເລີ່ມມອບເງິນສົມທົບນັບແຕ່ເດືອນເລີ່ມເຮັດສັນຍາເປັນຕົ້ນໄປ;

- ຜູ້ສະໝັກໃຈທີ່ເລີ່ມເຂົ້າເປັນຜູ້ປະກັນຕົນໃໝ່ ສາມາດເລືອກເງິນປະກັນຕົນໄດ້ສູງສຸດບໍ່ເກີນ ຫົກສິບ ສ່ວນຮ້ອຍ (60%) ຂອງເພດານເງິນປະກັນຕົນສູງສຸດ ທີ່ໄດ້ກໍານົດໃນແຕ່ລະໄລຍະ;

- ບຸກຄົນທົ່ວໄປ ທີ່ບໍ່ມີສະຖານະພາບເປັນຜູ້ອອກແຮງງານໃນຫົວໜ່ວຍແຮງງານ;

- ກໍລະນີເຮັດສັນຍາປະກັນຕົນສະໝັກໃຈໃໝ່ ບໍ່ເຖິງ ຫົກເດືອນ ຫາກຜູ້ກ່ຽວເສຍຊີວິດຈາກພະຍາດທີ່ໄດ້ຮັບການຕິດຕາມປິ່ນປົວກ່ອນການເຮັດສັນຍາປະກັນຕົນສະໝັກໃຈ ແມ່ນຜູ້ກ່ຽວຈິງໃຈປິດບັງຂໍ້ມູນ, ຈະຖືວ່າສັນຍາເປັນໂມຄະ ແລະ ບໍ່ໄດ້ຮັບການອຸດໜູນຈາກປະກັນສັງຄົມ, ສໍາລັບເງິນສົມທົບທີ່ມອບຜ່ານມານັ້ນຈະບໍ່ສົ່ງຄືນ.

**15. ມາດຕາ 92 ການຍື່ນເອກະສານຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມ**

ຫົວໜ່ວຍແຮງງານ ທີ່ຍື່ນເອກະສານການຂຶ້ນທະບຽນປະກັນສັງຄົມຄົບຖ້ວນແລ້ວ ອົງການປະກັນສັງຄົມແຫ່ງຊາດ ຕ້ອງພິຈາລະນາການຂຶ້ນທະບຽນ ແລະ ອອກໃບຢັ້ງຢືນການຂຶ້ນທະບຽນໃຫ້ຫົວໜ່ວຍແຮງງານ ພາຍໃນເວລາ ໜຶ່ງ ຫາ ສອງວັນລັດຖະການ, ສໍາລັບຜູ້ອອກແຮງງານ ແມ່ນຕ້ອງຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມພາຍໃນເວລາ ສາມສິບວັນ;

ຜູ້ສະໝັກໃຈ ທີ່ປະກອບຟອມ ແລະ ເຮັດສັນຍາຜູກພັນແລ້ວ ຈະຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມໃຫ້ທັນທີ.

**16. ມາດຕາ 93 ການສະສົມໄລຍະປະກັນຕົນ (ປັບປຸງ)**

1) ໄລຍະປະກັນຕົນຂອງແຕ່ລະປະເພດການອຸດໜູນ ແມ່ນໃຫ້ນັບເອົາເດືອນທີ່ໄດ້ມີການສົມທົບເງິນເຂົ້າກອງທຶນປະກັນສັງຄົມເທົ່ານັ້ນ, ສໍາລັບ ການອຸດໜູນ ເສຍຊີວິດ ຫາກໄດ້ມອບເງິນສົມທົບຄົບເງື່ອນໄຂຂອງການອຸດໜູນດັ່ງກ່າວແລ້ວ ໃຫ້ນັບໄລຍະຮັບການອຸດໜູນໄລຍະສັ້ນນັ້ນເພີ່ມໃຫ້ຜູ້ກ່ຽວ;

2) ການກໍານົດໄລຍະປະກັນຕົນ ສໍາລັບການພິຈາລະນາເງື່ອນໄຂການອຸດໜູນປະກັນສັງຄົມປະເພດໃດໜຶ່ງ ຫາກມີໄລຍະປະກັນຕົນຄົບຕາມເງື່ອນໄຂປະກັນຕົນຂອງແຕ່ລະປະເພດການອຸດໜູນທີ່ກ່ຽວຂ້ອງແລ້ວ ຫາກລວມປີການທັງໝົດເຂົ້າກັນ ແຕ່ຍັງມີສ່ວນເສດ ເຈັດເດືອນຂຶ້ນໄປ ໃຫ້ນັບເປັນ ໜຶ່ງປີ;

3) ການນັບໄລຍະປະກັນຕົນ ໃຫ້ຖືເອົາວັນທີ່ເຫດການເກີດຂຶ້ນເປັນບ່ອນອີງ ໂດຍກໍານົດເອົາວັນທີ 15 ຂອງເດືອນຂຶ້ນໄປໃຫ້ນັບເປັນໄລຍະປະກັນຕົນຂອງການເກີດສິດຮັບການອຸດໜູນ, ຖ້າເຫດການເກີດຂຶ້ນກ່ອນວັນທີ 15 ຂອງເດືອນ ແມ່ນຈະບໍ່ຖືເປັນໄລຍະປະກັນຕົນຂອງເດືອນນັ້ນ;

4) ການກໍານົດໄລຍະປະກັນຕົນຈາກການມອບເງິນສົມທົບ ຈະນັບເປັນເດືອນປະກັນຕົນໄດ້ກໍ່ຕໍ່ເມື່ອຜູ້ກ່ຽວໄດ້ມອບເງິນສົມທົບບໍ່ຫຼຸດ ຊາວຫ້າສ່ວນຮ້ອຍ ຂອງຄ່າແຮງງານຂັ້ນຕໍ່າສຸດທີ່ລັດຖະບານປະກາດໃຊ້ແຕ່ລະໄລຍະ;

5) ຜູ້ປະກັນຕົນທີ່ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຫາກໄດ້ປ່ຽນບ່ອນເຮັດວຽກໃໝ່ ຫຼື ໄດ້ໂຈະການມອບເງິນສົມທົບຊົ່ວຄາວ ກໍສາມາດແຈ້ງບັດປະກັນສັງຄົມ ຫຼື ຂໍ້ມູນປະຫວັດສ່ວນຕົວ ໃຫ້ກົງກັບທີ່ເຄີຍປະກັນຜ່ານມາ ຕາມແບບທີ່ອົງການປະກັນສັງຄົມແຫ່ງຊາດ ກໍານົດໃຫ້ແມ່ນສາມາດສືບຕໍ່ມອບເງິນສົມທົບ ເພື່ອບວກລວມເຂົ້າກັບໄລຍະທີ່ໄດ້ປະກັນຕົນຜ່ານໆມາ ເປັນໄລຍະປະກັນຕົນທັງໝົດ;

6) ຜູ້ປະກັນຕົນ ທີ່ໄດ້ມອບເງິນສົມທົບຢູ່ຫຼາຍບ່ອນ ຫຼື ຜູ້ປະກັນຕົນທີ່ໄດ້ຍົກຍ້າຍຈາກ ການຈັດຕັ້ງຂອງລັດ ໄປຫົວໜ່ວຍແຮງງານ ຫຼື ຈາກຫົວໜ່ວຍແຮງງານ, ຜູ້ສະໝັກໃຈ ຍົກຍ້າຍມາການຈັດຕັ້ງຂອງລັດ ຊຶ່ງໄດ້ສະສົມເງິນສົມທົບ, ປີການ ຫຼື ປີປະກັນຕົນ ແລະ ຍັງບໍ່ໄດ້ຮັບເງິນອຸດໜູນເທື່ອດຽວມາກ່ອນ ແມ່ນໃຫ້ບວກປີການ ຫຼື ປີປະກັນຕົນ ເພື່ອຮັບການອຸດໜູນປະກັນສັງຄົມຕາມພາກລັດ ຫຼື ພາກວິສາຫະກິດເທົ່ານັ້ນ, ໂດຍໃຫ້ບວກປີການ ຫຼື ປີປະກັນຕົນທັງໝົດນັ້ນເຂົ້າກັນ ດັ່ງນີ້:

- ຜູ້ທີ່ຄົບເງື່ອນໄຂຂໍຮັບອຸດໜູນບໍານານຢູ່ພາກລັດ ຫາກມີໄລຍະປະກັນຕົນຢູ່ພາກວິສາຫະກິດ ການຄິດໄລ່ເງິນອຸດໜູນບໍານານ ແມ່ນໃຫ້ບວກ ໄລຍະປະກັນຕົນທີ່ໄດ້ຈ່າຍເງິນສົມທົບຢູ່ພາກວິສາຫະກິດ ເປັນປີການເພີ່ມເຂົ້າໃນການຄິດໄລ່ຕາມລະບົບການອຸດໜູນບໍານານຂອງພາກລັດ;
- ຜູ້ທີ່ຄົບເງື່ອນໄຂຂໍຮັບອຸດໜູນບໍານານຢູ່ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ຫາກມີປີການຢູ່ພາກລັດ ການຄິດໄລ່ເງິນອຸດໜູນບໍານານ ແມ່ນໃຫ້ເອົາປີການຢູ່ເບື້ອງລັດມາຄິດໄລ່ເປັນຄະແນນບໍານານເພີ່ມໃຫ້ຜູ້ກ່ຽວ ຊຶ່ງເທົ່າກັບ 0,8 ຄະແນນຕໍ່ປີຕາມລະບົບຄະແນນນະໂຍບາຍ ໂດຍບໍ່ໄດ້ກໍານົດຄະແນນສູງສຸດ;

7) ການກໍານົດໄລຍະປະກັນຕົນຈາກການຮັບອຸດໜູນປ່ວຍການ ແລະ ອຸດໜູນອອກລູກລາຍເດືອນ ໃນເດືອນຕ້ອງມີວັນຮັບອຸດໜູນ ແຕ່ ສິບຫາວັນຂຶ້ນໄປ ຈຶ່ງຈະນັບເປັນເດືອນທີ່ຜູ້ກ່ຽວໄດ້ປະກັນຕົນ ຖ້າບໍ່ຄົບ ສິບຫ້າວັນແມ່ນຕ້ອງມີເງິນສົມທົບໃນເດືອນດັ່ງກ່າວຈຶ່ງນັບເປັນໄລຍະປະກັນຕົນ;

8) ພາຍຫຼັງບວກປີການ ຫຼື ປີປະກັນຕົນເຂົ້າກັນແລ້ວ ຈະເກີດສິດຮັບການອຸດໜູນ ຫຼື ບໍ່ ແມ່ນໃຫ້ອີງໃສ່ການກໍານົດໄລຍະປະກັນຕົນຂອງແຕ່ລະປະເພດການອຸດໜູນ ແຕ່ໃຫ້ຄິດໄລ່ເງິນອຸດໜູນຕາມລະບົບທີ່ຜູ້ກ່ຽວສັງກັດສຸດທ້າຍເທົ່ານັ້ນ;

9) ກໍລະນີ ຜູ້ປະກັນຕົນທີ່ໄດ້ຮັບການອຸດໜູນບໍານານຢູ່ສອງພາກມາກ່ອນ ແມ່ນບໍ່ໃຫ້ມີການປ່ຽນແປງ ສ່ວນຜູ້ທີ່ສະເໜີຂໍຮັບການອຸດໜູນບໍານານທັງສອງພາກ ພາຍຫຼັງໄດ້ປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ ຈະໄດ້ຮັບການພິຈາລະນາໃຫ້ຮັບການອຸດໜູນບໍານານ ຕາມພາກໃດໜຶ່ງ ທີ່ຜູ້ກ່ຽວສັງກັດຢູ່ບ່ອນສຸດທ້າຍເທົ່ານັ້ນ;

10) ຜູ້ປະກັນຕົນຄົບເງື່ອນໄຂ ແຕ່ຍັງສືບຕໍ່ເຮັດວຽກ ແລະ ມອບເງິນສົມທົບນັ້ນ ໃຫ້ເພີ່ມເງິນອຸດໜູນບໍານານຕາມອາຍຸກະສຽນ ແລະ ປີການເກີນ ໜຶ່ງປີໃດ ໄດ້ຮັບ ໜຶ່ງສ່ວນຮ້ອຍ (1%) ແຕ່ທັງໝົດບໍ່ໃຫ້ເກີນອັດຕາສ່ວນ ສູງສຸດຂອງເງິນອຸດໜູນບໍານານ ທີ່ໄດ້ກໍານົດໄວ້.

17. ມາດຕາ 95 ການພິຈາລະນາການອຸດໜູນປະກັນສັງຄົມ (ປັບປຸງ)

ການພິຈາລະນາການອຸດໜູນປະກັນສັງຄົມປະເພດຕ່າງໆ ໂດຍພື້ນຖານແລ້ວແມ່ນພິຈາລະນາຕາມເງື່ອນໄຂແຕ່ລະປະເພດການອຸດໜູນທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການປະກັນສັງຄົມແລ້ວບາງປະເພດການອຸດໜູນຍັງຕ້ອງໄດ້ອີງໃສ່ ກົດໝາຍ ຫຼື ນິຕິກໍາກ່ຽວຂ້ອງຕື່ມອີກ;

1) ສໍາລັບຜູ້ປະກັນຕົນທີ່ມີອາຍຸຖືພາ ຫົກເດືອນຂຶ້ນໄປ ຫາກອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງ ກໍລະນີບໍ່ມີເງື່ອນໄຂຮັບເງິນບໍາເນັດອອກລູກ ຫຼື ເງິນອຸດໜູນອອກລູກ ເນື່ອງຈາກມອບເງິນສົມທົບບໍ່ຄົບເງື່ອນໄຂ, ແມ່ນໃຫ້ພິຈາລະນາຈ່າຍອຸດໜູນປ່ວຍການໃຫ້ຜູ້ກ່ຽວ ຕາມຈໍານວນວັນພັກຕົວຈິງທີ່ໄດ້ຮັບການຢັ້ງຢືນຈາກແພດ ແຕ່ສູງສຸດບໍ່ເກີນ ສາມສິບວັນ, ກໍລະນີຫາກສຸຂະພາບຍັງບໍ່ແຂງແຮງຕ້ອງໄດ້ຮັບການກວດ ແລະ ຢັ້ງຢືນທາງການແພດເພື່ອສືບຕໍ່ຮັບອຸດໜູນປ່ວຍການ;

2) ການກໍານົດໄລຍະສູງສຸດຂອງການຮັບການອຸດໜູນປ່ວຍການ ແມ່ນໃຫ້ກໍານົດເອົາຕາມໄລຍະເດືອນ, ປີປະຕິທິນ, ກໍລະນີພັກເຈັບປ່ວຍ ສິບຫ້າວັນຂຶ້ນໄປ ພາຍໃນເດືອນ ຕ້ອງມີການຢັ້ງຢືນຢຸດຈ່າຍເງິນເດືອນຊົ່ວຄາວຈາກຜູ້ໃຊ້ແຮງງານ;

3) ປະກັນສັງຄົມຈະຄິດໄລ່ ແລະ ເບີກຈ່າຍເງິນອຸດໜູນປ່ວຍການຕາມຈໍານວນວັນພັກຕົວຈິງທີ່ລະບຸຢູ່ເອກະສານຢັ້ງຢືນທາງດ້ານການແພດ, ກໍລະນີມີວັນພັກປ່ວຍການບໍ່ຕໍ່ເນື່ອງ ແລະ ມີການຢັ້ງຢືນພັກປ່ວຍການຫຼາຍຄັ້ງໃນຂອບເຂດ ສາມສິບວັນ ແມ່ນສາມາດສືບຕໍ່ຮັບການອຸດໜູນດັ່ງກ່າວໄດ້ເລີຍ ແຕ່ຖ້າມີການປະໄລຍະຫ່າງເກີນ ສາມ

ສິບວັນ ຕ້ອງໄດ້ປະກອບແບບຟອມເພື່ອຂໍຮັບອຸດໜູນປ່ວຍການໃໝ່;

4) ໃບຢັ້ງຢືນທາງດ້ານການແພດທີ່ຈະເອົາມາຂໍອຸດໜູນປ່ວຍການ ຕ້ອງແມ່ນການຢັ້ງຢືນຈາກໂຮງໝໍຂອງລັດ ຫຼື ເອກະຊົນ ຍົກເວັ້ນຈາກ ຄລີນິກ, ສ່ວນໃບຢັ້ງຢືນທີ່ເປັນພາສາຕ່າງປະເທດຕ້ອງໄດ້ຮັບການແປເປັນພາສາລາວ ແລະ ມີການເຊັນຮັບຮອງຈາກຜູ້ໃຊ້ແຮງງານ ຫຼື ບໍລິສັດແປພາສາ;

5) ຜູ້ກຳລັງຮັບອຸດໜູນໃດໜຶ່ງຈາກປະກັນສັງຄົມ ຫາກເສຍຊີວິດ ໃນໄລຍະເດືອນທີ່ກຳລັງຮັບອຸດໜູນອື່ນທີ່ມີຈຳນວນວັນຮັບອຸດໜູນ ສາມສິບວັນຂຶ້ນໄປ ແມ່ນຈະເກັບເງິນຄືນ ໂດຍຫັກຈາກເງິນອຸດໜູນເສຍຊີວິດຕາມຈຳນວນເດືອນທີ່ຊໍ້າຊ້ອນກັນນັ້ນ;

6) ກໍລະນີພົບເຫັນການຈ່າຍອຸດໜູນວ່າງງານຊໍ້າຊ້ອນກັບເດືອນທີ່ມີວຽກເຮັດ ຫຼື ເດືອນທີ່ໄດ້ມອບເງິນສົມທົບ ແມ່ນຈະໄດ້ເກັບເງິນອຸດໜູນວ່າງງານຄືນຕາມຈຳນວນເດືອນຊໍ້ານັ້ນ ແລະ ຖືເປັນການສິ້ນສຸດຮັບອຸດໜູນວ່າງງານ;

7) ຜູ້ປະກັນຕົນທີ່ຮັບອຸດໜູນປ່ວຍການ ເນື່ອງຈາກການສູນເສຍອະໄວຍະພາຍນອກ ທີ່ມີລັກສະນະຖາວອນ, ຊັດເຈນ ເມື່ອສິ້ນສຸດການປິ່ນປົວ ແລະ ໄດ້ຮັບການຢັ້ງຢືນການແພດ, ແມ່ນສາມາດຮັບການຕີລາຄາ ຈັດປະເພດ ແລະ ລະດັບການເສຍກຳລັງແຮງງານ ຕາມລະບຽບການ ໂດຍບໍ່ຕ້ອງລໍຖ້າໃຫ້ຮັບການອຸດໜູນປ່ວຍການ ຄົບຕາມແຕ່ລະໄລຍະ;

8) ຜູ້ປະກັນຕົນທີ່ຮັບອຸດໜູນປ່ວຍການ ເນື່ອງຈາກປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ເມື່ອຮັບຄົບໃນໄລຍະ ຫົກເດືອນທຳອິດແລ້ວ ຫາກໄດ້ຮັບການຢັ້ງຢືນທາງການແພດ ບໍ່ສາມາດຟື້ນຟູໃຫ້ກັບມາສູ່ສະພາບປົກກະຕິ, ແມ່ນສາມາດຮັບການຕີລາຄາ ຈັດປະເພດ ແລະ ລະດັບການເສຍກຳລັງແຮງງານ ຕາມລະບຽບການ ໂດຍບໍ່ຕ້ອງລໍຖ້າຮັບການອຸດໜູນປ່ວຍການ ໃນໄລຍະ ຫົກເດືອນສຸດທ້າຍຕື່ມອີກ;

9) ຜູ້ປະກັນຕົນທີ່ບໍ່ເຄີຍຜ່ານການຮັບອຸດໜູນປ່ວຍການ ຖ້າໄດ້ຮັບການຢັ້ງຢືນການແພດທີ່ຊັດເຈນກ່ຽວກັບການສູນເສຍອະໄວຍະໃດໜຶ່ງທີ່ເປັນລັກສະນະຖາວອນ ແລະ ບໍ່ສາມາດຟື້ນຟູໄດ້ ແມ່ນສາມາດຮັບການຕີລາຄາ ຈັດປະເພດ ແລະ ລະດັບການເສຍກຳລັງແຮງງານ ເພື່ອຂໍຮັບການອຸດໜູນເສຍກຳລັງແຮງງານ ຕາມລະບຽບການ;

10) ການພິຈາລະນາອຸດໜູນປະກັນສັງຄົມ ສຳລັບຜູ້ປະກັນຕົນທີ່ມອບເງິນສົມທົບຢູ່ຫຼາຍຫົວໜ່ວຍແຮງງານ ໃນເວລາດຽວກັນໃຫ້ປະຕິບັດ ດັ່ງນີ້:

- ການພິຈາລະນາຄິດໄລ່ເງິນອຸດໜູນປ່ວຍການ, ອຸດໜູນອອກລູກ, ອຸດໜູນເສຍຊີວິດ, ອຸດໜູນເຫື່ອດຽວ, ອຸດໜູນເສຍກຳລັງແຮງງານ ແລະ ອຸດໜູນສະມາຊິກຄອບຄົວ ແມ່ນໃຫ້ເອົາເງິນສົມທົບຈາກແຫຼ່ງຕ່າງໆ ບວກເຂົ້າກັນ ແຕ່ສູງສຸດບໍ່ໃຫ້ເກີນເພດານເງິນປະກັນຕົນແຕ່ລະໄລຍະ ເພື່ອເປັນບ່ອນອີງໃນການຄິດໄລ່ເງິນອຸດໜູນດັ່ງກ່າວ;
- ການພິຈາລະນາການອຸດໜູນໄລຍະຍາວ ເປັນຕົ້ນການອຸດໜູນບຳນານ ແມ່ນໃຫ້ຄິດໄລ່ຄະແນນບຳນານ ຕາມການສົມທົບຈາກແຫຼ່ງຕ່າງໆ ເພື່ອສະສົມໃຫ້ຜູ້ກ່ຽວ. ການສົມທຽບເພດານເງິນອຸດໜູນບຳນານ ກໍ່ໃຫ້ເອົາເງິນສົມທົບແຫຼ່ງຕ່າງໆບວກເຂົ້າກັນ ແຕ່ສູງສຸດແມ່ນບໍ່ໃຫ້ເກີນເພດານເງິນປະກັນຕົນແຕ່ລະໄລຍະ;
- ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ການອຸດໜູນປ່ວຍການເນື່ອງຈາກການພັກວຽກຍ້ອນການປິ່ນປົວ, ຟື້ນຟູສຸຂະພາບ ແລະ ເສຍກຳລັງແຮງງານ ການຄິດໄລ່ເງິນອຸດໜູນແມ່ນໃຫ້ອີງໃສ່ຫົວໜ່ວຍແຮງງານທີ່ຜູ້ກ່ຽວປະສົບອຸປະຕິເຫດເທົ່ານັ້ນ;

11) ການພິຈາລະນາເງື່ອນໄຂອາຍຸຂອງຜູ້ສະເໜີຮັບການອຸດໜູນບຳນານພາກລັດ ແມ່ນໃຫ້ປະຕິບັດຕາມລະບຽບການກ່ຽວຂ້ອງ ແຕ່ລະໄລຍະ, ສ່ວນການຂໍອຸດໜູນສະມາຊິກຄອບຄົວສຳລັບພາກລັດ ແມ່ນໃຫ້ອີງໃສ່ ປີທີ່ເຫດການເກີດຂຶ້ນ, ສຳລັບພາກວິສາຫະກິດ ແມ່ນໃຫ້ເອົາ ເດືອນ, ປີເກີດ ຂອງຜູ້ກ່ຽວ ທຽບກັບ ເດືອນ, ປີ ທີ່ຮ້ອງຂໍການອຸດໜູນກ່ຽວຂ້ອງ ຫຼື ປີທີ່ເຫດການເກີດຂຶ້ນ;

12) ຜູ້ປະກັນຕົນພາກລັດ ທີ່ໄດ້ໄປສຶກສາຢູ່ພາຍໃນ ຫຼື ຕ່າງປະເທດ ຫຼື ຜູ້ທີ່ຖືກແຕ່ງຕັ້ງໃຫ້ໄປປະຈຳການຢູ່ຕ່າງປະເທດ ເມື່ອເກີດຮັບອຸດໜູນໃດໜຶ່ງ ແມ່ນໃຫ້ເອົາເງິນເດືອນ ເດືອນສຸດທ້າຍ ກ່ອນໄປສຶກສາ ຫຼື ໄປປະຈຳການຢູ່ຕ່າງປະເທດເປັນບ່ອນອີງໃນການຄິດໄລ່;

13) ຜູ້ປະກັນຕົນສະໝັກໃຈ ທີ່ໄດ້ມາເຮັດສັນຍາ ແລ້ວມີການຄ້າງຈ່າຍ ເວລາມາຂໍອຸດໜູນໃດໜຶ່ງຫາກພົບເຫັນມີການຈ່າຍເງິນສົມທົບບໍ່ຮອດເດືອນທີ່ເກີດສິດຈະຕ້ອງຊໍາລະຄືນຈົນຮອດເດືອນທີ່ເກີດສິດນັ້ນເສຍກ່ອນ ຈຶ່ງຈະດໍາເນີນການຄິດໄລ່ ແລະ ເບີກຈ່າຍໃຫ້ໄດ້;

14) ຜູ້ປະກັນຕົນສະໝັກໃຈ ຫາກເກີດສິດຮັບອຸດໜູນສະມາຊິກຄອບຄົວ ແມ່ນສາມາດສືບຕໍ່ເປັນຜູ້ປະກັນຕົນສະໝັກໃຈໄດ້, ສໍາລັບການອຸດໜູນປະກັນສັງຄົມປະເພດຕ່າງໆໃຫ້ເກີດສິດຕາມການປະກັນຂອງຜູ້ກ່ຽວ, ບໍ່ໃຫ້ຮັບຊໍ້າຊ້ອນ;

15) ການພິຈາລະນາ ແລະ ອະນຸມັດເງິນອຸດໜູນບໍານານ ສໍາລັບພາກລັດ ພາກສ່ວນກົງຈັກການຈັດຕັ້ງພາກລັດທີ່ຜູ້ກ່ຽວສັງກັດຢູ່ ເປັນຜູ້ອອກຂໍ້ຕົກລົງຮັບການອຸດໜູນບໍານານ ໂດຍໃຫ້ມີເນື້ອໃນສອດຄ່ອງກັບ ແຈ້ງການຂອງຂະແໜງພາຍໃນ, ປະຫວັດລັດຖະກອນ, ໃບຢຸດຈ່າຍເງິນເດືອນ, ໃບຄິດໄລ່ເງິນເດືອນ, ສໍາມະໂນຄົວ, ບັດປະຈໍາຕົວ ໄດ້ຮັບການຢັ້ງຢືນຂໍ້ມູນພະນັກງານ-ລັດຖະກອນ ຈາກຂະແໜງການພາຍໃນ. ກໍລະນີ ຂໍ້ຕົກລົງເຂົ້າຮັບການອຸດໜູນບໍານານ ແລະ ຂໍ້ມູນຫຼັກຖານກ່ຽວຂ້ອງບໍ່ກົງກັນ ແມ່ນຕ້ອງໄດ້ຮັບການແກ້ໄຂໃຫ້ຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ ຈຶ່ງສາມາດຮ້ອງຂໍອຸດໜູນດັ່ງກ່າວ;

ສໍາລັບ ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ພິຈາລະນາ ແລະ ອະນຸມັດອອກຂໍ້ຕົກລົງ. ສ່ວນການຄິດໄລ່ເງິນອຸດໜູນບໍານານ ແມ່ນມອບໃຫ້ອົງການປະກັນສັງຄົມແຫ່ງຊາດ ຫຼື ຫ້ອງການປະກັນສັງຄົມ ແຂວງ, ນະຄອນຫຼວງ ເປັນຜູ້ຈັດຕັ້ງປະຕິບັດ;

16) ກໍລະນີ ຜູ້ຮັບການອຸດໜູນບໍານານ ແລະ ເສຍກໍາລັງແຮງງານ ທີ່ໄດ້ໄປດໍາລົງຊີວິດຢູ່ຕ່າງປະເທດ ສອງປີໃດຕ້ອງໄດ້ມີການກວດສອບຂໍ້ມູນຄືນ, ກໍລະນີຈໍາເປັນແມ່ນຕ້ອງໄດ້ມີການຢັ້ງຢືນການດໍາລົງຊີວິດ ຈາກກົງສຸນ ຫຼື ສະຖານທູດ ຂອງ ສປປ ລາວ ທີ່ປະຈໍາຢູ່ປະເທດນັ້ນໆ, ຫາກບໍ່ມີການຢັ້ງຢືນ ຈະໂຈະການຈ່າຍເງິນອຸດໜູນໄວ້ຊົ່ວຄາວ ສູງສຸດບໍ່ເກີນ ສິບສອງເດືອນ ນັບຈາກວັນທີ່ໄດ້ແຈ້ງໃຫ້ຄອບຄົວຜູ້ກ່ຽວຊາບ, ໄລຍະດັ່ງກ່າວຫາກມີການຢັ້ງຢືນການດໍາລົງຊີວິດ ຈະຈ່າຍເງິນອຸດໜູນຍ້ອນຫຼັງໃຫ້ຜູ້ກ່ຽວ, ກໍລະນີມີການຢັ້ງຢືນເກີນ ສິບສອງເດືອນ ນັບຈາກວັນທີ່ໄດ້ແຈ້ງໃຫ້ຄອບຄົວຜູ້ກ່ຽວຊາບ ເດືອນທີ່ຖືກໂຈະການຈ່າຍເງິນອຸດໜູນໄວ້ນັ້ນ ແມ່ນຈະບໍ່ໄດ້ຄິດ ໄລ່ຄືນໃຫ້ ຊຶ່ງຈະຈ່າຍໃຫ້ນັບແຕ່ເດືອນທີ່ໄດ້ຮັບການຢັ້ງຢືນເປັນຕົ້ນໄປ;

17) ກໍລະນີ ຜູ້ປະກັນຕົນທີ່ມີເງິນເດືອນປະກັນຕົນສູງມາຕະຫຼອດ ແຕ່ມີເດືອນສຸດທ້າຍນັ້ນ ຫາກຕໍ່າກ່ວາປົກກະຕິ ຊຶ່ງແມ່ນເດືອນທີ່ຜູ້ກ່ຽວ ເຈັບປ່ວຍ, ເກີດລູກ ຫຼື ເດືອນທີ່ເຫດການເກີດຂຶ້ນ ແມ່ນໃຫ້ເອົາເດືອນກ່ອນເດືອນສຸດທ້າຍນັ້ນມາຄິດໄລ່ ແຕ່ຖ້າຫາກເດືອນສຸດທ້າຍນັ້ນແມ່ນເດືອນທີ່ຄົບເງື່ອນໄຂຂອງການເກີດສິດແມ່ນໃຫ້ເອົາເຂົ້າໃນການຄິດໄລ່ເລີຍ;

ຖ້າຫາກວ່າເງິນເດືອນປະກັນຕົນໃນໄລຍະທີ່ເອົາມາຄິດໄລ່ເງິນອຸດໜູນປະເພດໃດໜຶ່ງ ຫາກເປັນເດືອນທີ່ຮັບອຸດໜູນຈາກປະກັນສັງຄົມ ແມ່ນໃຫ້ເອົາເດືອນກ່ອນໜ້ານັ້ນເຂົ້າໃນການຄິດໄລ່;

ຫາກໃນໄລຍະ ຫົກເດືອນສຸດທ້າຍ ມີເງິນເດືອນປະກັນຕົນຕໍ່າຄືກັບເດືອນສຸດທ້າຍ ໝາຍວ່າລະບົບເງິນເດືອນຜູ້ກ່ຽວເປັນແນວນັ້ນ, ແມ່ນໃຫ້ເອົາເງິນເດືອນສຸດທ້າຍທີ່ຕໍ່ານັ້ນມາລວມເຂົ້າໃນການຄິດໄລ່.

18) ການໂຈະສິດຮັບການອຸດໜູນ ແລະ ການຮຽກເກັບເງິນອຸດໜູນປະກັນສັງຄົມ ຄືນ ແມ່ນໃຫ້ປະຕິບັດ ດັ່ງນີ້:

- ກໍລະນີ ຈໍານວນເງິນອຸດໜູນທີ່ໄດ້ຈ່າຍໄປນັ້ນຫາກມີການຜິດພາດ ເນື່ອງຈາກຜູ້ຮັບອຸດໜູນ ຫຼື ຕົວແທນຂອງຜູ້ກ່ຽວ ມີເຈດຕະນາປອມແປງເອກະສານ ຫຼື ປິດບັງຂໍ້ມູນ ເພື່ອໃຫ້ເກີດສິດຮັບການອຸດໜູນ ຫຼື ເພື່ອໃຫ້ສືບຕໍ່ໄດ້ຮັບເງິນອຸດໜູນ ຫຼື ເພື່ອໃຫ້ໄດ້ຮັບເງິນອຸດໜູນທີ່ເກີນກວ່າຄວາມເປັນຈິງ ອົງການປະກັນສັງຄົມແຫ່ງຊາດ, ຫ້ອງການປະກັນສັງຄົມ ແຂວງ, ນະຄອນຫຼວງ ມີສິດຮຽກເກັບຈໍານວນເງິນທີ່ຈ່າຍເກີນ ຫຼື ຜິດພາດນັ້ນຄືນເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ຢ່າງຄົບຖ້ວນ, ກໍລະນີ ທີ່ເຫັນວ່າມີຄວາມເໝາະສົມ ຕ້ອງສະເໜີໃຫ້ພາກສ່ວນກ່ຽວຂ້ອງດໍາເນີນຄະດີ ຕາມກົດໝາຍແຫ່ງ ສປປ ລາວ;

- ກໍລະນີ ໄດ້ເບີກຈ່າຍເງິນອຸດໜູນປະກັນສັງຄົມປະເພດໃດໜຶ່ງ ເກີນໃຫ້ຜູ້ປະກັນຕົນທີ່ເສຍຊີວິດ ເນື່ອງຈາກການແຈ້ງຂໍອຸດໜູນເສຍຊີວິດຊັກຊ້າ ແມ່ນມີສິດທວງເອົາເງິນທີ່ໄດ້ຈ່າຍເກີນໄປແລ້ວນັ້ນຄືນ ດ້ວຍຮູບການມາມອບຄືນ ຫຼື ຫັກເອົາຈາກເງິນອຸດໜູນເສຍຊີວິດຂອງຜູ້ປະກັນຕົນ;

## III. ການຈັດຕັ້ງປະຕິບັດ

1) ມອບໃຫ້ ອົງການປະກັນສັງຄົມແຫ່ງຊາດ, ຫ້ອງການປະກັນສັງຄົມ ແຂວງ, ນະຄອນຫຼວງ, ສູນປະກັນສັງຄົມ ເມືອງ, ເທດສະບານ, ນະຄອນ ເປັນຜູ້ຈັດຕັ້ງປະຕິບັດ;

2) ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍແຮງງານ, ບຸກຄົນ, ນິຕິບຸກຄົນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ແລະ ຄໍາແນະນໍາ ສະບັບນີ້ດ້ວຍ;

3) ອົງການປະກັນສັງຄົມແຫ່ງຊາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈັດຕັ້ງເຊື່ອມຊຶມ, ເຜີຍແຜ່, ແນະນໍາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ແລະ ຄໍາແນະນໍາສະບັບນີ້ ໃຫ້ທົ່ວເຖິງ;

4) ຄໍາແນະນໍາ ສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນຄໍາແນະນໍາສະບັບເລກທີ 1206/ຮສສ, ລົງວັນທີ 23 ເມສາ 2019. ນິຕິກໍາໃດກົດໝາຍວ່າດ້ວຍການປະກັນສັງຄົມ ທີ່ຂັດກັບຄໍາແນະນໍາສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ

ກະຊວງແຮງງານແລະສະຫວັດດີການສັງຄົມ
ລັດຖະມົນຕີ

ໃບຄໍາ ຂັດທິຍະ